ຫຸມພັນ ຣັດຕະນະວົງ

# ນາງ ຄຳກອງ



- ນາງກອງສີ
- ນາງ ສິງຄຳ

ສະຖາບັນຄົ້ນຄ້ວາວັດທະນະທຳ
ກະຊວງຖະແຫລງຂ່າວ ແລະ ວັດທະນະທຳ
2002

ທຸມພັນ ຣັດຕະນະວົງ

# ນາງຄຳກອງ

✿ ນາງ ກອງສີ

✿ ນາງ ສີງຄຳ

ສະຖາບັນຄົ້ນຄວ້າວັດທະນະທັມ

ກະຊວງຖະແຫລງຂ່າວ ແລະ ວັດທະນະທັມ

2002

## ❀ ຄະນະຈັດທຳ :

- ບົດ ແລະ ພາບ — ທຸມພັນ ຣັດຕະນະວົງ
- ອອກແບບ — ບົວໄລ ເພັງແສງຄຳ
- ພິມດີດ — ຄຳເນີງ ສູນດາຣາ

  ຈິດຕາ ຈັນທະນັນ

## ❀ ສາລະບານເລື່ອງ :


| | ຫນ້າ |
|---|---|
| ❀ ບາງ ກອງສີ | ໓ |
| ❀ ບາງ ສີງຄຳ (ຈາກລຳຄັດທະນາມ) | ໕ |
| ❀ ບາງ ຄຳກອງ (ຈາກເລື່ອງຈຳປາສີຕົ້ນ) | ໗ |


❀ ພາບ:

- ຫນ້າປົກ: *ບາງ ປັດທຸມມາໃນກອງຫລວງ*
- ຫລັງປົກ: *ພຣະເຈົ້າຈຸນລານີ ມາໂຜດເອົາບາງປັດທຸມມາ ແລ້ວຕັ້ງຊື່ໃຫມ່ໃຫ້ເປັນ ບາງຄຳກອງ*
- ຮູບຕ່າງໆ: *ທີ່ຫໍກອງຫລວງວັດຊຽງທອງ - ຫລວງພະບາງ*

## ສະຫນັບສະຫນູນໂດຍ :


The Albert Kunstadter Family Foundation
1035 Fifth Avenue
Newyork , Newyork 10028

# ຄຳຊີ້ແຈງ

" ບັນດາຫຼານທີ່ຮັກທັງຫຼາຍ ລຸງຫວັງວ່າຫຼານສ່ວນຫຼາຍອາດຈະໄດ້ຍິນໄດ້ຟັງນິທານເລື່ອງນາງຄຳກອງທີ່ປູ່ຫຼືຍ່າຫຼືພໍ່ເຖົ້າແມ່ເຖົ້າ ຕະຫຼອດພໍ່ແມ່ຂອງພວກຫຼານ ເລົ່າໃຫ້ຟັງມາແດ່ແລ້ວ ແຕ່ແນວໃດກໍດີລຸງຂໍແນະນຳໃຫ້ພວກຫຼານຮູ້ໄວ້ບາງຢ່າງ ເຊິ່ງບາງທີຫຼານທັງຫຼາຍອາດຈະຍັງບໍ່ທັນຮູ້ມາກ່ອນກໍ່ເປັນໄດ້. ອັນນິທານເລື່ອງນາງຄຳກອງນີ້ ນອກຈາກທີ່ມີຢູ່ໃນວັນນະກັມຂອງລາວເຮົາແລ້ວ ຍັງມີຢູ່ໃນວັນນະກັມຂອງຊາດອື່ນດ້ວຍ ເຊັ່ນຂະເໝນເປັນຕົ້ນ. ສະເພາະແຕ່ໃນລາວພວກເຮົາແລ້ວ ພວກເຮົາມີວັນນະກັມທີ່ເວົ້າອອກຊື່ "ນາງຄຳກອງ" ຢູ່ສອງເລື່ອງເຊັ່ນເລື່ອງໜຶ່ງມີຢູ່ໃນວັນນະກັມເອກຂອງລາວເຮົາຊື່ວ່າ "ຈຳປາສີ່ຕົ້ນ" ເຊິ່ງວົງການລະຄອນທີວີຂອງໄທຍໄດ້ເອົາໄປດັດເປັນລະຄອນໂດຍໃຫ້ຊື່ວ່າ "ສີ່ກຸມມານ" ເຊິ່ງກໍ່ແມ່ນຊື່ຮຽກຂອງກຸມມານທັງສີ່ທີ່ມີຢູ່ໃນເນື້ອເລື່ອງວັນນະກັມນັ້ນເອງ. ອີກເລື່ອງໜຶ່ງ ມີຊື່ວ່າ "ສີສ່ວງພະນັນກັນເອົານາງຄຳກອງ" ຫຼືຈະເວົ້າວ່າ ນິທານເລື່ອງ ນາງຄຳກອງ ເລື່ອງທີ່ສອງກໍ່ວ່າໄດ້ ເລື່ອງນີ້ມີຢູ່ໃນວັນນະກັມປາກເປົ່າພື້ນບ້ານຂອງຊາວລ້ອງນ້ຳຄານ ເປັນນິທານແອ້ມສະຖານທີ່ນ້ຳບໍ່ແກ້ວທີ່ຊາວບ້ານຊາວເມືອງຖືເອົາເປັນສະຖານທີ່ສັກສິດ. ນ້ຳບໍ່ແກ້ວນັ້ນຕັ້ງຢູ່ໃນນ້ຳຄານລະຫວ່າງບ້ານດອນໂມ ແລະ ບ້ານປາກບາກ ເປັນນ້ຳບໍ່ ທີ່ມີຄຸນສົມບັດພິເສດ ເຊັ່ນ ມີຄວາມໃສເໝືອນນ້ຳທັມມະດາ. ເມື່ອເຖິງໂອກາດບຸນປີໃໝ່ຂອງທຸກໆປີ ຊາວລ້ອງຄານບໍ່ວ່າຜູ້ເຖົ້າຜູ້ແກ່ແລະບ່າວສາວ ຈະພາກັນເອົາເສບເອົາຊໍ ນັ່ງນາດ ຟາດຄ້ອງ ແລະ ກອງຂັນ ຕະຫຼອດເຄື່ອງຢູ່ຂອງກິນ ເຄື່ອງຄ້າຂອງຂາຍໄປເຕົ້າໂຮມກັນຢູ່ດອນຊາຍປາກນ້ຳບໍ່ແກ້ວແຫ່ງນັ້ນ ເພື່ອມ່ວນຊື່ນຄຶບງັນ ຈັດພິທີມພິທີອັງເຊີນເອົານ້ຳບໍ່ສັກສິດນັ້ນ ຂຶ້ນເມືອສົງພຣະພຸດທະຮູບຢູ່ຕາມຖ້ຳຄູຫາຕ່າງໆ ທີ່ຢູ່ໜ້າຜາສູງຊັນອ້ອມຮອບນ້ຳບໍ່ແກ້ວນັ້ນເອງ ແລະ ນຳເອົາໄປສົງພຣະພຸດທະຮູບຢູ່ວັດບ້ານໃຜບ້ານມັນດ້ວຍ.

ສະຖານທີ່ນ້ຳບໍ່ແກ້ວ ເປັນສະຖານທີ່ ທີ່ສວຍສົດງົດງາມ ມີພູຜາຫີນສູງຊັນ ມີປ່າໄພດົກໜາ ມີໜ້າຜາຫີນສູງ ເຊິ່ງປະກອບມີຖ້ຳມີຄູຫາ ມີສີສັນແລະລວງລາຍຕ່າງໆປະດັບ ກາຍເປັນທິວທັດສະນີຍະພາບໜ້າຕື່ນຕາຕື່ນໃຈອີຫຼີ. ແຕ່ສິ່ງສຳຄັນນະທີ່ນີ້ ແມ່ນຫີນຜາແລະໂຫງ່ນຫີນມີຮູບຊົງແຕກຕ່າງກັນ ອັນພາໃຫ້ເກີດມີການສົມມຸດຕິຖານເອົາເປັນຕົວປະກອບນິທານເລື່ອງນາງຄຳກອງຂຶ້ນມາເຊັ່ນ ມີຜາຮຸ້ງ ຄືຫີນທີ່ຢູ່ຈອມຜາສູງມີຮູບຊົງເໝືອນຮຸ້ງມາ

ກິນຄືນ. ຢູ່ແຄມນ້ຳຄານມີຫີນໂຫງ່ນໜຶ່ງຮຽກວ່າ ຫີນໄກ່ຕໍ່ ເພາະມີຮູບຊົງເໝືອນໄກ່ຜູ້ກຳລັງຕໍ່ກັນ ແຕ່ພໍດີຫາງໄກ່ໂຕໜຶ່ງຂາດໄປ ເພິ່ນຈຶ່ງເວົ້າວ່າແມ່ນຮຸ້ງໂຕນັ້ນມາຊູດເອົາພໍໄດ້ແຕ່ທ່ອນຫາງໄປກິນ.

ຢູ່ອ້ອມຮອບບໍລິເວນນ້ຳບໍ່ແກ້ວນັ້ນ ມີຫີນໂຫງ່ນໜ່ວຍໜຶ່ງເໝືອນຮູບກອງ ເພິ່ນໄດ້ສົມມຸດວ່າ ມີນາງຄຳກອງຢູ່ໃນນັ້ນ. ຫີນໜ່ວຍໜຶ່ງເປັນຮູບຄືຫຼັງໝູ ເພິ່ນຮຽກວ່າກ້ອນໝູຈີ່ ແລະ ອີກໜ່ວຍໜຶ່ງມີຮູກະບ້ອງກະແບ້ງເປັນອັດໄຂ ເພິ່ນຮຽກວ່າກ້ອນຂີ້ຝອຍ.

ຈາກຮູບລັກສະນະທັມມະຊາດຂອງຫີນຊະນິດຕ່າງໆເຫຼົ່ານີ້ ເພິ່ນຈຶ່ງສົມມຸດຕິຖານປະດິດນິທານ ເລື່ອງນາງຄຳກອງສະເພາະໃນແຫ່ງດັ່ງກ່າວຂຶ້ນມາ. ເພິ່ນເລົ່າສືບກັນມາຈົນເທົ້າທຸກມື້ນີ້ວ່າ: "ມີອ້າຍບ່າວອາສາພະນັນກັນເພື່ອຈະໄດ້ນາງຄຳກອງມາເປັນເມັຽ. ຜູ້ໜຶ່ງພະນັນຈີ່ໝູ 20 ກຳ ຢູ່ກ້ອນໝູຈີ່ໃຫ້ສຸກແລະບໍ່ໃຫ້ເຖົ່າຖ່ານຕົກຈາກກ້ອນຫີນນັ້ນລົງໃສ່ນ້ຳ. ອີກຜູ້ໜຶ່ງພະນັນຊູດຂີ້ຝອຍອັດຮູຫີນຂີ້ຝອຍນັ້ນໃຫ້ຄົບທຸກຮູ. ອີກຜູ້ໜຶ່ງອາສາເຫຼົາຫວາຍ 20 ວາແຍ່ກົ້ນເຂັມບໍ່ໃຫ້ຂ້ອງ ຜູ້ສຸດທ້າຍອາສາເອົາອະໄວຍະວະເພດ ( ຄວາມອ່ວຍ ) ຕຳໜ້າກອງໃຫ້ທະລຸ. ໃນທີ່ສຸດຜູ້ທີ່ຊະນະແມ່ນຜູ້ສຸດທ້າຍ ເພາະວ່ານາງຄຳກອງທົນລຳຄານໃຈບໍ່ໄດ້ເລີຍເອົາມີດເຈາະໜ້າກອງໃຫ້" ເປັນນິທານເຄິ່ງຕະຫຼົກເຄິ່ງຄຳທວາຍ ເພື່ອໃຫ້ຜູ້ອື່ນທາຍຄຳຕອບວ່າ "ແມ່ນໃຜໃນພວກອ້າຍບ່າວຜູ້ພະນັນກັນ ຈະຊະນະຫຼືຈະໄດ້ນາງຄຳກອງໄປເປັນຄູ່ຄອງ": ຍັງມີນິທານທີ່ຄ້າຍໆກັນກັບ "ເລື່ອງນາງຄຳກອງນັ້ນອີກສອງເລື່ອງ ເຊິ່ງທັງສອງເລື່ອງນີ້ ປະກອບເປັນຄົນລະຕອນຢູ່ໃນວັນນະກັມເອກຂອງລາວເຮົາສະໄໝລ້ານຊ້າງເຊັ່ນກັນ ນັ້ນຄື "ລຳຄັດທະນາມ" ສອງເລື່ອງນັ້ນ ເລື່ອງໜຶ່ງແມ່ນເລື່ອງ "ນາງກອງສີ" ແລະເລື່ອງສອງແມ່ນເລື່ອງ "ນາງສີງຄຳ"

ບັນດາຫຼານທີ່ຮັກແພງ ! ເຖິງແມ່ນວ່າ "ລຳຄັດທະນາມ" ນັ້ນຈະເປັນວັນນະກັມມະຫາກາບຈາກນິທານຊາດົກ ອັນເວົ້າເຖິງການເກີດມາໄຊ້ຊາດຂອງພຣະພຸດທະອົງກໍຈິງ ແຕ່ນັກປາຊຜູ້ແຕ່ງໄດ້ເອົາສະຖານທີ່ ທີ່ມີຈິງໃນດິນແດນລ້ານຊ້າງລາວເຮົາສະໄໝກ່ອນ ມາເປັນສະຖານທີ່ຕ່າງໆໃນເລື່ອງ ແລະເອົາເຫດການທາງປະຫວັດສາດຍຸກເດີກດຳບັນມາເປັນເນື້ອຫາສາລະໃນເລື່ອງ ເຊັ່ນໃນຕອນທີ່ເວົ້າເຖິງ "ນາງກອງສີ" ແລະ "ນາງສີງຄຳ" ນັ້ນ ເພິ່ນໄດ້ຍົກເອົາພະຍາແຖນໃນອານາຈັກແຖນບູຮານ ເຊິ່ງມີສະຖານທີ່ຕັ້ງຢູ່ໜອງແສ ( ພາກຕາເວັນຕົກຂອງຢຸ່ນນ່ານ-ຈີນ ) ອົງເປັນພະບິດາຂອງຂຸນບູຣົມແລະຂຸນບູຣົມເອງຜູ້ຖືວ່າເປັນບັນພະບູຣຸດຂອງຊາດລາວເຮົາອົງໜຶ່ງ ມາເວົ້າໃນເລື່ອງ ອັນນັບວ່າເປັນການບັນທຶກຄວາມຈຳທາງປະຫວັດສາດເກົ່າແກ່ຂອງລາວເຮົາໄປພ້ອມ. ນິທານເລື່ອງນາງ ກອງສີ ແລະ ນາງສີງ

ຄຳ ນັ້ນສາມາດແປຄວາມໝາຍໄດ້ວ່າ:

ແຕ່ກີ້ແຕ່ກ່ອນ ເປີ້ງພຣະຍາແຖນຫຼວງຍັງເປັນຄົນ ແລະ ປົກຄອງອານາຈັກແຖນຫຼື ອານາຈັກໜອງແສ(1) ຢູ່ນັ້ນ ມີຕຳນານເລົ່າສືບກັນມາວ່າ ພຣະອິງໄດ້ສົ່ງລູກຊາຍຂອງພຣະອິງ ອັນໄດ້ແກ່ ຂຸນບູຣົມຣາຊາທິຣາຊ ລົງມາກິນເມືອງລຸ່ມຄືທົ່ງນານ້ອຍອ້ອຍໜູ (2) ຫຼື ເມືອງແຖງນັ້ນເອງ ອັນສະແດງເຖິງການຂະຫຍາຍອານາເຂດລົງມາທາງໃຕ້ຂອງອານາຈັກແຖນ. ມີເລື່ອງເລົ່າຂານກັນມາຈົນກາຍເປັນເທບນິຍາຍໃນເລື່ອງທ້າວຄັດທະນາມ ສະແດງໃຫ້ເຫັນ ອິດທິລິດ ແລະພະລັງອຳນາດຂອງແຖນຫຼວງໃນການວາງກົດມົນທຽນບານແລະຮີດຄອງປະເພນີອັນຄັດເຄັ່ງຂອງພຣະອົງ ໃນການປົກຄອງບ້ານເມືອງ ກໍຄືໃນການຊີ້ຂາດສະຕາກັມຂອງບ່າວໄພ່ຣາຊະດອນ ເປັນຕົ້ນແມ່ນຜູ້ຄົນພົນລະເມືອງໃນເມືອງລຸ່ມ ເຊັ່ນ: ຫາກມີການລະເມີດກົດບັນຍັດຂອງແຖນແລ້ວ ແຖນກໍ່ຈະນຳກຳລັງລົງມາປາບປາມໃຫ້ຍ່ອຍຍັບໄປເລີຍ.

ຕໍ່ໄປຂໍໃຫ້ພວກຫຼານທັງຫຼາຍຈົ່ງພາກັນຊື່ນຊົມໃນນິທານເລື່ອງ ນາງ ກອງສີ ແລະ ນາງ ສີງຄຳ ອັນມີສ່ວນອ້າງອີງເຖິງບູຣຸສ ແລະ ສະຖານທີ່ທາງປະຫວັດຕິສາດລາວເຮົາໄປກ່ອນ ແລ້ວຈຶ່ງຄ່ອຍຟັງ "ເລື່ອງ ນາງ ຄຳກອງ" ຕໍ່ໄປ.

## ເລື່ອງນາງກອງສີ

ດົນແສນດົນແລະນານແສນນານມາແລ້ວ ທີ່ຂຸນບູຣົມຣາຊາທິຣາຊໄດ້ຮັບມອບໝາຍຈາກພະຍາໃຫຍ່ແຖນຫຼວງອີງເປັນພຣະບິດາທີ່ອານາຈັກໜອງແສ ໃຫ້ມາສ້າງແລະກິນເມືອງລຸ່ມທີ່ທົ່ງນານ້ອຍອ້ອຍໜູ. ພຣະອົງໄດ້ນຳພາບ່າວໄພ່ຣາຊະດອນສ້າງສາບ້ານເມືອງແລະພຣະສີມະຫານະຄອນຣາຊຂຶ້ນໂດຍໃສ່ຊື່ວ່າ: ເມືອງຂວາງທະບູຣີສີມະຫານະຄອນຣາຊ. ພຣະອົງໄດ້ຕູ້ມໄພ່ຟ້າຂ້າແຜ່ນດິນ ພາເຂົາສ້າງບ້ານແປງເຮືອນໃຫ້ຣຸ່ງເຮືອງເຫຼືອງເຫຼື້ອມ ແລະ ຢູ່ເຢັນເປັນສຸຂ ປາສະຈາກໂພຍໄພແລະອັນຕາຍຈາກເສິກເສືອເໜືອໃຕ້ມາປະຈົນບັງບຽດ. ສິ່ງສຳຄັນນັ້ນ ພຣະອົງໄດ້ວາງຮີດແລະຄອງໃຫ້ຖືປະຕິບັດໃນທຸກໆຊັ້ນຂອງສັງຄົມ ເຊັ່ນໃຫ້ເຄົາລົບ:

" ມື້ຮ້ອງ　　ມື້ຮວາຍ (3)
ເຈັດຄ່ຳ　　ແປດຄ່ຳ
ສິບສີ່ຄ່ຳ　　ສິບຫ້າຄ່ຳ

ໃນວັນເຫຼົ່ານີ້   ຫ້າມບໍ່ໃຫ້ຂ້າສັດຕັດຊີວິດ

ຄືກຢ່າຕ້ອງ     ມອງຢາຕໍ່າ "

ແລ້ວພຣະອົງກໍ່ໄດ້ປ້ອຍແຊ່ງໄວ້ວ່າ:

" ຖ້າຜູ້ໃດບໍ່ເຄົາລົບຢຳເກງ ສິ່ງເຫຼົ່ານີ້ແລ້ວ ຂໍໃຫ້ດັບວາຍຈິບຫາຍໝົດທັງເມືອງ "

ຂຸນບູຣົມຣາຊາທິຣາຊໄດ້ຈຸຕິຕາຍໄປແລ້ວ   ຂຸນໃໝ່ຕະກຸນຫຼັງໄດ້ພັດປ່ຽນກັນຂຶ້ນຄອງຣາຊະສົມບັດ. ກາລະໄດ້ຜ່ານໄປ ຮີດ ແລະ ທຳນອງຄອງທັມອັນດີຕ່າງໆທີ່ບັນພຣະບູຣຸສໄດ້ມອບໄວ້ໃຫ້ນັ້ນ ຖືກລະເມີດແລະຖິ້ມປະລະເລີຍຢ່າງຊະຊາຍ ຫຼັກທົດສະຣາຊສົບປະການ ແລະ ທຳນອງຄອງທັມທັງປວງກໍບໍ່ໄດ້ຮັບການປະຕິບັດ ບ້ານເມືອງບໍ່ມີຄື່ມີແປ ການໃຊ້ອຳນາດບາດໃຫຍ່ ການແຍ່ງຊີງອຳນາດ ການບີບບັ້ສີໄຟໄພ່ຟ້າຂ້າແຜ່ນດິນ ໄດ້ລະບາດຂຶ້ນຢ່າງໜັກໜ່ວງ ເຮັດໃຫ້ບ້ານເມືອງຫວຸ້ນວາຍ ຊາວປະຊາຣາຊເດືອດຮ້ອນ ອົງພຣະຣາຊາຍຶດຖືເອົາສິ່ງຄາມເອົາການຂ້າຟັນຮັ່ນແທງ  ການປຸ້ນສະດົມເປັນວິຖີປະພຶດປະຕິບັດຜູ້ມີອຳນາດບາດໃຫຍ່ໃຊ້ອຳນາດເຖື່ອນຂອງຕົນ  ຂົ່ມເຫັງເຕັງເຕັກບ່າວໄພ່ຣາສະດອນທຳລາຍຊັບສິນຂອງບ້ານເຮືອງ ປູປານານ້ຳສັດສາວາສິ່ງ ຖືກຕ້ອນຈົນດັບມອດ ປ່າໄມ້ລົດົ້ວລຳດີຖືກໂຄ່ນເອົາໄປຂາຍ ເຮັດໃຫ້ຫ້ວຍນ້ຳວັງປາບົກແຫ້ງ ຄວາມທຸກຍາກລຳເຂັນມາຕ້ອງຊີວິດຂອງຊາວເມືອງ ເກີດມີການປຸ້ນຈີ້ ໂສເພນີ ຂີ້ລັກມັກຊິກ  ຂ້າເຈົ້າເອົາຂອງ ບ້ານເມືອງເກີດໂກລາຫົນ ເຫດຕ່າງໆເຫຼົ່ານີ້ ຈຶ່ງຮ້ອນໄປເຖິງເທວະດາຜູ້ເປັນເຈົ້າອາຮັກຫຼັກເມືອງ ຈົນອົດບໍ່ໄດ້ຈຶ່ງໄປຟ້ອງພະຍາແຖນ  ພະຍາແຖນຫຼວງຈຶ່ງໄດ້ສົ່ງກອງທັບງູຟາງງມາກິນບ້ານກິນເມືອງກິນໝົດທຸກສິ່ງທຸກຢ່າງຈົນບໍ່ຫລໍ. ກອງທັບຫຼວງຂອງພຣະຍາຂວາງທະບູລີສີມະຫານະຄອນຣາຊ ບໍ່ສາມາດຕ້ານທານທັບງູຟາງງໄດ້ ຈຶ່ງໄດ້ຕົກເປັນເຫຍື່ອທ້ອງຂອງພວກມັນໝົດ. ຂະນະນັ້ນພະຍາໃຫຍ່ຂວັນເມືອງພ້ອມດ້ວຍພະມະເຫສີ ໄດ້ພາກັນຮ່ຳເພິງກ່ອນທີ່ງູຟາງງຈະກິນເປັນເຫຍື່ອວ່າ   ຄວນຈະເອົາຣາຊະທິດາຂອງຕົນຊື່ນາງກອງສີສຸພັນນະກັນຣະຍານີ   ໄປໄວ້ໃນກອງພ້ອມດ້ວຍໂພຊະນາຫານປັດໄຈຕ່າງໆ ຫຼອນມີຜູ້ມາພົບເຫັນສ່ວນຈະໄດ້ມີຜູ້ສືບເຊື້ອຕະກຸນຕໍ່ໄປ.

ຢູ່ຕໍ່ມາ ທ້າວຄັດຕະນາມທີ່ເດີນທາງມາຈາກອິນທະປັດນະຄອນ ( ເຂົ້າໃຈວ່າແມ່ນນະຄອນຫຼວງຂອງກຳພູຊາ ເຊິ່ງໜ້າຈະແມ່ນ ນະຄອນວັດ ) ເພື່ອຕາມຫາພຣະບິດາຂອງພຣະອົງ ໄດ້ມາພໍ້ເມືອງຂວາງທະບູຣີທີ່ປາສະຈາກວິນຍານຂອງຜູ້ຄົນແລະສັດສາວາສິ່ງ ແມ່ນແຕ່ຜູ້ດຽວ ຫໍຜາສາດພຣະຣາຊະວັງອັນສວຍສົດງົດງາມ ເຊິ່ງທຸກສິ່ງທຸກຢ່າງຍັງຢູ່ໃນສະພາບເດີມ ກໍ່ປາສະຈາກຜູ້ຄົນ. ພຣະອົງຍ່າງເລາະສຳຫຼວດເບິ່ງພຣະຣາຊະວັງ ເລີຍໄປພົບກອງ

ຫຼວງບ່ອນທີ່ບັນຈຸນາງກອງສີຢູ່ໃນທັ້ນ. ພຣະອິງລອງຕີກອງລອງເບິ່ງກໍ່ເລີຍໄດ້ຍິນສຽງຄົນສາບແຊ່ງງູຟາງດັງອອກມາ ພຣະອິງຈຶ່ງໄດ້ຊິງເອົາພຣະແສງເຈາະເອົານາງອອກມາ. ເມື່ອນາງອອກມາແລ້ວ ນາງກໍ່ລາຍງານກ່ຽວກັບຄວາມເປັນມາຂອງເຫດການວິປະໂຫຍກດັ່ງກ່າວໃຫ້ທ້າວຄັດທະນາມຟັງຕະຫຼອດວິທີການ ທີ່ຈະເຮັດໃຫ້ທັບງູຟາງນັ້ນກັບມາ. ນາງ ກອງສີໄດ້ບອກວ່າ ໃຫ້ດັງໄຟຂຶ້ນກຸ້ມຟ້າແລ້ວງູຟາງກໍຈະພາກັນມາໂລດ. ເມື່ອຮູ້ດັ່ງນັ້ນ ພຣະອິງຈຶ່ງສັ່ງໃຫ້ທ້າວຮ້ອຍກວຽນ ແລະ ທ້າວໄມ້ຮ້ອຍຕົ້ນ ເຊິ່ງເປັນຜູ້ຕິດຕາມພຣະອິງດັງໄຟກອງຮ້າຂຶ້ນ ແລ້ວທັນໄດທີ່ຄວັນໄຟກຸ້ມຂຶ້ນ ງູຟາງກໍ່ບິນມືດຟ້າມືດໝອກມາ ເມື່ອເຫັນດັ່ງນັ້ນ ພຣະອິງເລີຍເອົາພິນຂອງພຣະອິງມາດີດຂຶ້ນ ແລ້ວຝູງງູທັງຫຼາຍເລີຍຕົກກອງກັນຕາຍ. ພຣະອິງດີດອີກ ແລ້ວກະດູກຄົນທີ່ງູກິນລົງທ້ອງຂອງມັນກໍ່ອອກມາ ແລ້ວຈຶ່ງດີດຕໍ່ ກາຍເກີດເປັນຟອງນ້ຳສຸເອົາຊາກງູຟາງທັງໝົດໄປກອງກັນກາຍເປັນພູ ພູທໍ ພູໂຮງ ຫຼືໂພນໂຮງປັດຈຸບັນນີ້ເອງ. ສ່ວນດູກຄົນນັ້ນ ພຣະອິງກໍ່ເອົາໄມ້ເທົ້າກົກຊີ້ຕາຍປາຍຊີ້ເປັນມາຊີ້ໃສ່ແລ້ວກໍ່ກັບເກີດເປັນຄົນຄືເກົ່າ.

ພຣະເຈົ້າເມືອງຂວາງທະບູຣີສີມະຫານະຄອນຣາຊ ໄດ້ຂໍມອບລູກສາວໃຫ້ທ້າວຄັດທະນາມເອົາເປັນຣາຊະກັນລະຍານີ. ເພິ່ນເວົ້າວ່າເມືອງຂວາງທະບູຣີສີມະຫານະຄອນຣາດນັ້ນ ແມ່ນນະຄອນຣາຊະສີມາ ຫຼືໂຄຣາຊ ເຊິ່ງເປັນເມືອງຂອກແດນຂອງລາວສະໄໝລ້ານຊ້າງ ກ່ອນທ້າວຄັດທະນາມຈະພານາງກອງສີສຸພັນນະກັນຣະຍານີ ຈາກອິງພໍ່ກະສັດໄປເພື່ອຕາມຫາພຣະບິດາຕໍ່ໄປ ພຣະອິງກໍ່ໄດ້ເທສະໜາສັ່ງສອນຄົນທັງເມືອງໃຫ້ປະຕິບັດທົດສະຣາຊ ຣັດຄອງ ຮັກສາສິນ ຢູ່ກິນໃນທັມ ຊ່ອຍເຫຼືອແລະປຸ້ມລຸມກັນພັດທະນາສ້າງສາບ້ານເມືອງໃຫ້ຈະເລີນຮຸ່ງເຮືອງໃຫ້ປະຊາຊົນໄດ້ຮັບສິນທັມ ແລະ ຢູ່ສະໜຸກສຸກສະບາຍຕະຫຼອດກາລະນານທຸກຄົນ.

# ນິທານເລື່ອງນາງຄຳສິງ

ນາງຄຳສິງມີຊື່ເຕັມວ່າ ນາງຄຳສິງສຸວັນນະກັນລະຍານີ ເປັນນິທານຕອນຕໍ່ໄປຈາກຂອງນາງກອງສີ ເນື້ອເລື່ອງແຕກຕ່າງກັນໜ້ອຍໜຶ່ງ ແຕ່ການດຳເນີນເລື່ອງຄືກັນ ລຸງຈະເວົ້າຫຍໍ້ໆສູ່ຟັງ:

"ເມື່ອທ້າວຄັດທະນາມໄດ້ປາບງູຟາງ ແລະ ຊ່ອຍຊູເອົາຜູ້ຄົນໃນເມືອງຂວາງທະບູຣີໃຫ້ຄືນຊີບໝົດສູ່ຄົນແລ້ວ ທ້າວກໍ່ສືບຕໍ່ເດີນທາງເພື່ອຈະນຳຫາພຣະບິດາຂອງພະອົງຕໍ່ໄປ ພຣະອົງພ້ອມດ້ວຍພຣະມະເຫສີຂອງພະອົງ ແລະ ຜູ້ຕິດຕາມໄດ້ໄປເຖິງອີກເມືອງໜຶ່ງຊື່ວ່າເມືອງຂວາງທະວະດີ. ເມືອງດັ່ງກ່າວກໍ່ປາສະຈາກຜູ້ຄົນ ແລະ ສັດສາວາສິ່ງ ແລະ ສິ່ງທີ່ມີຊີວິດທັງປວງ. ເຫດກໍ່ມີຢູ່ວ່າ: ມື້ໜຶ່ງພຣະຍາຂວາງທະວະດີອອກໄປຫລິ້ນສວນອຸທິຍານ ເລີຍໄປພັກເຊົາຢູ່ຮົມໄຮໃຫຍ່ຕົ້ນໜຶ່ງ. ຂະນະນັ້ນ ຍັງມີກາຜົວເມັຍຄູ່ໜຶ່ງພາກັນມາຈັບເທິງປາຍໄມ້ເພື່ອພັກຜ່ອນຕອນເວັນ ເລີຍຂີ້ລົງມາຖືກຫົວພຣະຍາເມືອງຂວາງທະວະດີ ພຣະຍາເລີຍກ້າວໂກທ ຈາກນັ້ນ ຈຶ່ງຕັດສັ່ງໃຫ້ທະກ້າທະຫານ ແລະ ຊາວບ້ານຊາວເມືອງຕາມລ່າ ແລະ ຂ້າເອົານົກໝູ່ປີກທັງຫລາຍມາເປັນອາຫານຈົນດັບວອດ ເພື່ອຈະແກ້ແຄ້ນໃຫ້ສົມໃຈພຣະອົງ. ຄວາມຈຶ່ງຮ້ອນຮອດພຣະຍາແຖນຫລວງ ຜູ້ຄອຍຊອມເບິ່ງການປະພຶດປະຕິບັດຂອງຣາຊະສຳນັກໃນຫົວເມືອງຕ່າງໆວ່າ ເປັນໄປຕາມຣາຊຈາຣີດປະເພນີຂອງຂຸນບູລົມສັ່ງໄວ້ ຫລື ບໍ່? ພຣະຍາແຖນຫລວງຈຶ່ງໄດ້ປ່ອຍຄອກທັງ ທ່ານ ຮຸ້ງ ຮັງແຮນ ບິນມືດຟ້າມືດຝົນມາກິນຄົນໃນເມືອງຂວາງທະວະດີມະຫານະຄອນຈົນກ້ຽງ. ແຕ່ເມື່ອກ່ອນທີ່ຮຸ້ງຈະມາກິນ ພຣະຍາເມືອງຂວາງພ້ອມດ້ວຍພຣະມະເຫສີ ພຣະອົງເລີຍຕົກລົງເອົາລູກສາວນາງຄຳສິງສຸວັນນະກັນລະຍານີ ໄປເຊື່ອງໄວ້ໃນໂກນເສົາຂອງທໍ່ຜາສາດ. ເມື່ອທ້າວຄັດທະນາມມາເຊົາຢູ່ພຣະຣາຊວັງ ແລະ ເມື່ອເດີນສຳຫລວດເຄາະຕ່ອຍໄປຕາມຝາໂຮງ ແລະ ເສົາ ຈຶ່ງມີສຽງຄົນຈົ່ມອອກມາ. ພຣະອົງເລີຍຊ່ອຍຊູເອົານາງອອກຈາກເສົາ ແລ້ວກໍ່ດັງໄຟຂຶ້ນເພື່ອອ່ອຍເອົາຮຸ້ງທ່ານມາ. ພະອົງເອົາພິນມາດີດຮຸ້ງຈຶ່ງຕາຍ ແລ້ວຈຶ່ງດີດເອົາກະດູກຄົນອອກມາສູບຊີວິດໃຫ້ຄືນມາດັ່ງເກົ່າ. ເພິ່ນເວົ້າວ່າກະດູດຮຸ້ງນັ້ນໄປກອງກັນກາຍເປັນຜາຮຸ້ງ. ສ່ວນບ່ອນທີ່ທັງຄຳຮຸ້ງພາກັນຕົກຕາຍນັ້ນ ກາຍເປັນບວກເປັນອ່າງເພິ່ນຮຽກວ່າ ອ່າງວະ ສ່ວນເມືອງຂວາງທະວະດີນັ້ນ ກໍ່ກາຍເປັນເມືອງທົງສາວະດີ ແລະ ເມື່ອບວກກັບອ່າງວະກໍ່ເປັນທົງສາວະດີອ່າງວະ ຍ້ອນວ່າມີທົງຄຳຮຸ້ງຕົກລົງເປັນອ່າງ (ເປັນຊື່ຂອງເມືອງມ່ານ ຫລື ພະມ້າ)".

ສ່ວນທ້າວຄັດທະນາມເມື່ອປາບຮຸ້ງແລ້ວ ທ່ານ ທົງ ໄດ້ໜີດແລ້ວ ແລະ ຊ່ອຍເອົາຊີວິດຊາວເມືອງໄວ້ໄດ້ໝົດແລ້ວ ກໍ່ເດີນທາງຕໍ່ໄປຈົນເຖິງເມືອງຈຳປາມະຫານະຄອນຕໍ່ໄປ ອັນໄດ້ແກ່ນະຄອນຈຳປາສັກຂອງພວກເຮົາດຽວນີ້ນັ້ນເອງ.

---

*(1) ໜອງແສນັ້ນມີສອງໜອງ ໜອງທີ່ໜຶ່ງຮຽກວ່າໜອງແສໃຫຍ່ ເຊິ່ງຈີນຮຽກວ່າ ເອີ້ຣາຍ. ໜອງນີ້ຕັ້ງຢູ່ທາງຕາເວັນຕົກສ່ຽງເໜືອຂອງເມືອງກຸນໝິງ ມີຮ່ອງຮອຍເມືອງເກົ່າຮຽກວ່າເມືອງແສ ຈີນຮຽກວ່າມົງເສີ ເຊິ່ງຕັ້ງຢູ່ດ້ານໃຕ້ຂອງເມືອງຕ້າຫຼີປັດຈຸບັນ. ໜອງແສໜຶ່ງຮຽກວ່າ ໜອງແສນ້ອຍ ຕັ້ງຢູ່ບໍ່ໄກຈາກເມືອງກຸນໝິງ ທາງດ້ານຕາເວັນຕົກ ເຊິ່ງຈີນຮຽກວ່າ ຕຽນຈີ້ (ຕຽນຄືແຖນໃນພາສາລາວ) ແລະ ສູນກາງອານາຈັກແຖນກໍ່ຕັ້ງຢູ່ແຄມໜອງແສນ້ອຍນີ້ເອງ.*

*(2) ທົ່ງນານ້ອຍອ້ອຍໜູນັ້ນ ຕັ້ງຢູ່ເມືອງແຖງຫຼືດຽນບຽນຟູປັດຈຸບັນ. ແຖງເວົ້າຕາມສຽງຂອງວຽດນາມ (Thanh) ແຕ່ຄວາມຈິງແລ້ວແມ່ນແຖນ. ດຽນບຽນຟູ ແມ່ນຕຽນບຽນຟູ ແປວ່າເຂດຂອກແດນຂອງແຖນ. ທົ່ງນານ້ອຍອ້ອຍໜູນັ້ນຍັງມີອີກຊື່ໜຶ່ງຮຽກວ່າ " ເມືອງລຸ່ມ". ສ່ວນຄຳວ່າແຖນຫຼືຕຽນຫຼືດຽນ (ໃນພາສາວຽດນາມນັ້ນ) ແປວ່າຟ້າ. ອານາຈັກແຖນຄືອານາຈັກຟ້າ (ແຕ່ຢູ່ດິນ) ພຣະຍາແຖນແມ່ນເຈົ້າຊີວິດຂອງອານາຈັກແຖນ ຫຼື ເມືອງແຖນ (ເມືອງແຖນ) ເມື່ອຕາຍໄປແລ້ວຮຽກວ່າຜີແຖນ.*

*(3). ມື້ຮ້ວງມື້ຮວາຍ... ແມ່ນຊື່ມື້ວັນໃນປະຕິທິນລາວເດີມ.*



✿ ຫໍກອງຫລວງ ວັດຊຽງທອງ.



✿ ຊາວເມືອງຈັກອິນ ເລວກັບຮຸ້ງຍັກ



✿ ເສໂນ ຮຸ້ງຍັກ ລ່າກິນຊາວເມືອງ ຈັກອິນ.



✿ ສຳເພົາສີ່ລຳ ຂອງທ້າວ ຈຳປາສີ່ຕົ້ນ ( ສີ່ກຸມມານ ).



✿ ຊາວເມືອງປັນຈາ ຍິນດີຊົມຊື່ນ ທີ່ນາງ ຄຳກອງໄດ້ກັບມາເປັນ ຣາຊີນີ

# ນາງ ຄຳກອງ

ບັນດາຫລານທີ່ຮັກທັງຫລາຍ ຈົ່ງຫັນໜ້າມາທາງພີ້
ລຸງຈິເລົ່ານິທານເລື່ອງໜຶ່ງມ່ວນໆສູ່ຟັງ

ເດີມແຕ່ກີ້ແຕ່ກ່ອນເຫີງມາແລ້ວຫລານເຮີຍ ສະໄໝທີ່ທົ່ວຊົມພູທະວີບ ຂອງພວກເຮົາກໍ່ເຊັ່ນກັນກັບພູມມີປະເທດຂອງພວກເຮົາ ຍັງບໍ່ທັນມີຄົນຕັດເອົາໄມ້ໄປຂາຍທຳລາຍປ່າ ເພິ່ນມັກເວົ້າໄວ້ວ່າ ໄມ້ມີຂຶນຄົນມີໜວດ ປ່າດົງວົງກົດອັນໄພສານ ຜີບໍ່ລ່ອງຄົນບໍ່ຫງວ ມີຍັກເຍນ ແລະ ກອງກ່ອຍ ມີທັງເດັ່ງລະສານເຖື່ອນຖ່ອຍສະໜ່ອຍດົງ ເວລານັ້ນມະນຸດ ແລະ ຍັກເຍນຍັງແບ່ງເຂດ ແບ່ງແດນກັນຢູ່ ແລະ ຕ່າງຄົນກໍ່ຕ່າງສ້າງບ້ານແປງເມືອງຢູ່ພໍໃຜພໍມັນ ບາງຄັ້ງກໍ່ໄປມາຫາສູ່ຄ້າຂາຍນຳກັນ ບາງຄັ້ງກໍ່ເຮັດສົງຄາມຂ້າຟັນຮັ່ນແທງກັນ ແລະ ບາງຄັ້ງກໍ່ເປັນແກ່ວເປັນດອງນຳກັນ ຍັງມີພະຍາຮຸ້ງຫລວງຜົວເມັຍຄູ່ໜຶ່ງ ຊື່ວ່າເສໂນຮຸ້ງ ເນົາຢູ່ເຂດແຄ້ວນ ຄີລີວົງກົດ (1) ທີ່ໄກຈາກເມືອງມະນຸດຢູ່ເປັນແສນໂຍດ (2) ຕົນໂຕຂອງພວກມັນໃຫ່ຍທໍ່ໜ່ອຍພູ ມີແກ້ວມະນີໂຊຍອງຢູ່ຫົວພວກມັນທັງສອງ ຕາຂອງພວກມັນແດງເຮືອເໜືອນດັ່ງກອງໄຟເດືອນຫ້າ ຂາຂອງພວກມັນໃຫ່ຍທໍ່ລຳຕານ ບາດພວກມັນບິນປີກກໍ່ບັງຕາເວັນເຮັດໃຫ້ມືດມົນໄປທົ່ວສາລະທິດ. ເຫີງນານເຕັມທີແລ້ວທີ່ພວກມັນສອງຜົວເມັຍເປັນຮຸ້ງຍັກ ເກີດມາທໍລະມານໄຊ້ຊາດ ເພື່ອຮັກສາແກ້ວວິເສດສອງໜ່ວຍນັ້ນໄວ້ຖ້າຜູ້ມີບຸນທີ່ຈະລົງມາເກີດ.

ມາມື້ໜຶ່ງຂາ (3) ສອງຜົວເມັຍໄດ້ສົນທະນາວ່າ: " ພວກເຮົາເກີດມາໄຊ້ຊາດເພື່ອຮັກສາແກ້ວສອງໜ່ວຍນີ້ກໍໄດ້ຫລາຍຂວບຟ້າມາປີແລ້ວ ເສືອໝີຊ້າງແຮດອັນເປັນອາຫານຂອງພວກເຮົາຢູ່ໃນວົງກົດແຫ່ງນີ້ ກໍບົກແຫ້ງ ແລະ ດັບມອດໄປໝົດແລ້ວ ມາດຽວນີ້ພວກເຮົາທົນອຶດຫິວຢູ່ບໍ່ແລ້ວ ຢາກຕາຍກໍຕາຍບໍ່ໄດ້ຍ້ອນແກ້ວວິເສດນີ້. ໃນສະພາບແນວນີ້ ເຫັນທີ່ພວກເຮົາຈະອົດລອງບິນຂ້າມເຂດແດນໄປຄ່ວາເມືອງມະນຸດລອງເບິ່ງ ຮູ້ວ່າທາງເມືອງມະນຸດພຸ້ນມີຝູງສັດສາວາສິ່ງຕະຫລອດຜູ້ຄົນມາກມາຍ ຫລອນວ່າມີລິດທີເກັ່ງກ້າສາມາດປາບພວກເຮົາໄດ້ ພວກເຮົາກໍຈະໄດ້ມອບແກ້ວວິເສດໃຫ້ ພຣະອົງ ແລະ ຕາຍໃຫ້ໝົດກັມໝົດເວນ

ພວກເຮົາເລີຍ. ແຕ່ຖ້າບໍ່ມີໃຜສາມາດປາບພວກເຮົາໄດ້ແລ້ວ ພວກເຮົາກໍຈະຍູທ່າງກິນສັດສາວາສິ່ງ ແລະ ມະນຸດພວກນັ້ນເປັນອາຫານພໍໃຫ້ຫາຍແສບທອງພວກເຮົາໄປເລີຍ "

| | |
|---|---|
| ບັດນີ້ ຈັກກ່າວເຖິງນະຄະເຣດລ້ຳ (4) | ເມືອງໃຫ່ຍຈັກຂີນ ກ່ອນແລ້ວ |
| ຍັງມີພູບານທິງ (5) | ສິບເມືອງແທນສ້າງ |
| ອັນວ່ານາມະກອນເຈົ້າ | ຣາຊາຕົນອາດ |
| ຊື່ວ່າ ພະຍາຈັກຂີນທະຣາຊທ້າວ | ທົງສ້າງສິບເມືອງ |
| ອັນວ່າ ນັກສະໜົມພ້ອມ | ກັບຣະຍາທີກາໝື່ນ |
| ໜ້າຊື່ນຊ້ອຍ | ແທນທ້າວປ່ຳລີ |
| ອັນວ່າ ມະເຫສີແກ້ວ | ເທວີທຽມບາດ |
| ເໝືອນດັ່ງຍາດແຕ່ຟ້າ | ລົງພ້ອມພ່ຳພະອົງ |
| ພຣະກໍ່ທົງເມືອງກ້ວາງ | ຈັກຂີນນະຄະເຣດ |
| ຂີງເຂດກ້ວາງ | ໄກລ້ຳໂຍດຍາວ |
| ພະກໍທົດສະຣາຊແທ້ (6) | ທັມແທ່ງສິບປະການ |
| ສົມພານມີໄພ່ໄທ | ຍໍຍ້ອງ |
| ອັນວ່າ ເສນາຂ້າ | ຄົນຫານນັບໝື່ນ |
| ທຸກຄ່ຳເຊົ້າ | ແທນເຝົ້ານັ່ນເນື່ອງ |
| ຊ້າງແລະ ມ້າ | ອະນັນເນກເຫຼືອຫລາຍ (7) |
| ພັງພາຍຢາຍ (8) | ຢູ່ໂຮງຄວານປ້ອນ (9) |
| ສາງເງິນພ້ອມ | ສາງຄຳຫລາຍໂກດ |
| ເສື້ອແລະຜ້າ | ແຮລົ້ວອະເນກນອງ (10) |
| ຝູງໄພ່ນ້ອຍ | ຊາວຣາຊທັດສະດອນ (11) |
| ທຳຖິ່ນສວນ | ຊື່ນບານຫລາຍຫຸ້ນ |
| ບໍ່ທອດໄຮ້ (12) | ຂອງເຂົ້າມັ່ງມູນ |
| ມີທັງເສດຖີພ້ອມ | ພາມະນາຫລາຍຊ່ຳ (13) |
| ທຸກຄ່ຳເຊົ້າ | ຍູຄ້າ ແລະ ຂາຍ (14) |
| ຄົນຫລາຍລົ້ນ | ເຕັມເມືອງທຸກແຫ່ງ |
| ຕັ້ງຕະຫລາດໄວ້ | ຂອງເຂົ້າມັ່ງມີ |

ບໍ່ທອດໄຊ້ທຸກສິ່ງ ໂພຄາ (15)
ຫລາຍພາສາ ຊ່ອຍໄຊລີໄຊ້ (16)
ພຣະອົງທົ່ງເມືອງໄດ້ ຫລາຍປີນານມາກ
ກໍ່ຈຶ່ງມີນາດເນື້ອ ນາງແກ້ວລູກຍິງ
ຊື່ວ່າປະທຸມມານ້ອຍ (17) ງາມປານພຣະອິນຫູ່
ພຣະພໍ່ເຈົ້າ ແພງນ້ອຍເກິ່ງຕາ
ກໍ່ຫາກລືຊາແທ້ ທົ່ງເມືອງເຊັ່ງຊ່າ
ຜິງເຜົ່າໜ້າ ປານແຕ້ມແຕ່ພີມ
ຄິງກິນສ້ວຍ ທະນູທອງເຫຼົາຫູ່
ເປັນໜໍ່ເຊື້ອ ຈັກຂິນກວ້າງຍອດຍິງ
ດູນານໄດ້ ຫລາຍປີເດືອນດັບຖ່າຍ
ສິບທ້າເຂົ້າ ງາມລົ້ນລື່ນຊຽນ(18)
ນາງກໍ່ເນົາໃນຫ້ອງ ທໍປາງຜາສາດ
ທຸກຄ່ຳເຊົ້າ ຫຽວເຝົ້າພໍ່ຕົນ.

ຂະນະທີ່ພຣະຍາຈັກຂິນມະຫາຣາຊທົ່ງຕູ້ມໄພ່ຟ້າຂ້າແຜ່ນດິນປະຄອງເມືອງ ໃຫ້ຢູ່ໃນສິນກິນໃນທັມ ຕາມຄອງທົດສະຣາຊສິບປະການ ອັນເຮັດໃຫ້ບ້ານເມືອງມີຄວາມສຸກກຸ່ມຊຸ່ມເຢັນ ແລະ ຈະເລີນຮຸ່ງເຮືອງຢູ່ນັ້ນ ຄືນວັນໜຶ່ງ ລາງຮ້າຍເລີຍມາເຂົ້າຄວາມຝັນຂອງພຣະອົງວ່າ: ອັນທີ່ ໜຶ່ງຝັນວ່າ ສຸຣິຍະຄາດ (19) ເກີດຂຶ້ນເຮັດໃຫ້ຜືນແຜ່ນປະທະພີ (20) ມືດມົນອົນທະການ. ອັນທີ່ສອງ ຝັນວ່າ ຝົນທ່າລ້ານທ່າໂກດຕົກລົງຮາແຜ່ນປະທະພີ ເຮັດໃຫ້ມະຫານະຄອນຈັກຂິນຈົມຢູ່ໃຕ້ນ້ຳ ສ່ວນຜາສາດທໍປາງກໍທັກທ່າວລົ້ມເກື່ອນລົງໃນແມ່ຄົງຄາ ຝູງບ່າວໄພ່ຣາຊະດອນ ແລະ ຊ້າງ ມ້າກໍ່ຕາຍສຽງບໍ່ຫູ່ ສ່ວນພຣະອົງເອງພອຍມີເຈົ້າຕ່ອນບຸນມາຊ່ວຍຈັບນີ້ວມືດຶງຂຶ້ນຈຶ່ງພົ້ນຕາຍ. ຮຸ່ງເຊົ້າເມື່ອພຣະອົງຕື່ນຂຶ້ນມາແລ້ວ ພຣະອົງຈຶ່ງໃຫ້ອາມາດໄປທັນເອົາບັນດາບັນດິດນັກປາຊພ້ອມດ້ວຍພາມມະນາ ໝໍໂຫນຮູຮາ ມາຕັດສ່ອງຄວາມຝັນອັນປະຫຼາດຂອງພຣະອົງ. ແລ້ວກໍຕັດສອງສໍຣະຍານວ່າ:" ບ້ານເມືອງຈະປະສົບມະຫາໄພ ອັນເປັນເຄາະເຂັນເອັນຮ້າຍ ເຮັດໃຫ້ບ້ານເມືອງລົ້ມຈົມ ແລະ ດັບມອດໄປ" ພວກເພິ່ນບອກລົບຄູນທານຫລາຍເທື່ອຫລາຍທີນ ແຕ່ຜົນກໍ່ອອກມາເຊັ່ນເດີມ ຈຶ່ງເປັນອັນບໍ່ໜ້າເຊື່ອ ແລະ ບໍ່ຢາກເຊື່ອເລີຍ ເພາະມະຫານະຄອນແຫ່ງນີ້ກໍ່ຂຶ້ນຊື່ລືຊາໄປທົ່ວພິພົບ ແມ່ນ

ແຕ່ຮ້ອຍປະເທດທ້າວ ກໍ່ຍັງເຂົ້າມາໂຍມ (21) ຢູ່ພາຍໃຕ້ປາຣະມີ ແລະ ລິດເດດຂອງມະຫາກະສັດ. ອັນເສີກເສືອເໜືອໃຕ້ເລັກໆນ້ອຍໆນີ້ລີ ຈະສາມາດມາຂວ້ຳເມືອງຕໍ່ໜ້າກອງລີພົນ (22) ຄືນຫານນັບໂກດໄດ້.

ບັດນີ້ ຈັກກ່າວເຖິງເສໂນຮຸ້ງຍັກ ສອງຜົວເມັຽມັນກໍ່ເນົາຢູ່ໃນ ຄີລີວົງກົດປ່າເລີກຂອງມັນຄັນພວກມັນທັງສອງເປີກສາເຫັນພ້ອມກັນແລ້ວ ພວກມັນກໍ່ພາເລີ່ມບິນມືດຟ້າ ມືດຝົນຂ້າມເຂດແດນຂອງພວກມັນເຂົ້າມາໃນຂອບແດນຂອງປະເທດ ທ້າວພະຍາໃທ່ຍຈັກຂິນ.

ມັນກໍຫຼິງເຫັນງົວຄວາຍພ້ອມ　　ທັງຄົນຊີຊ່ວາ
ຮຸ້ງບໍ່ຊ້າ　　ກິນສັງງບໍ່ຫຼໍ່
ແຕ່ນັ້ນຝູງເຂົາຊ້າ (23)　　ຄາເມບ້ານນອກ
ເລີຍຕື່ນຢ້ານ　　ໂຕນຟ້າວຜ່າຍພັງ
ລາງຄົນເຂົ້າປ່າໄມ້　　ຊົ້ນຫຼືບຫີນຜາ
ລາງຕົນໂຕນຖຸຄາ(24)　　ລອດດຳລົງນ້ຳ
ລາງຄົນຟ້າວ　　ລົງເຮືອນປົບແລ່ນ
ແລ້ວຈຶ່ງຂຶ້ນເຝົ້າເຈົ້າ　　ຈັກຂິນລ້ຳເລີດເມືອງ
ບັດນີ້ ມີການຮ້ອນ　　ອິນຕາຍບັງເກີດ (25)
ຍັງມີຮຸ້ງໃທ່ຍຮ້າຍ　　ບິນເຂົ້າສູ່ເມືອງ
ມັນກໍ່ກິນຄົນສັງງ　　ຄາເມບ້ານດ່ານ
ໝົດຖ່ອງບ້ານ　　ກິນສັງງບໍ່ຫຼໍ່

ເມື່ອພຣະບາດເຈົ້າໄດ້ຍິນຂ່າວຮ້າຍດັ່ງກ່າວນັ້ນແລ້ວ ພຣະອົງກໍຊົງຮຽກເອົາເສນາອາມາດມາຮັບ ພຣະຣາຊະອາດຍາກງມການ ຮີບກຳຈັດສັດຖ່ອຍຮ້າຍດັ່ງກ່າວໃຫ້ສູນໄປ.

ເມື່ອນັ້ນ ໂຍທາທ້າວ　　ດາເປືອງຕົກແຕ່ງ
ທຸກຊຳຊ້າ　　ມາພ້ອມຊູ່ຄົນ
ເຂົາກໍ່ກອງກັນເຂົ້າ　　ວຽງຫລວງຄັບຄັ່ງ
ໄຫລຫລັ່ງເຂົ້າ　　ສະໜາມກ້ວາງນີ້ນັ່ນ

| | |
|---|---|
| ກໍ່ຫາກດູຫລາຍລົ້ນ | ພົນຫລວງຫລາຍໝື່ນ |
| ກັບທັງຊ້າງ ແລະມ້າ | ສະຖຽນຮ້ອງສູ່ພາບ |
| ມີທັງຫອກ ແລະງ້າວ | ປືນຫລວງນ້ຳມອກໃຫ່ຍ (26) |
| ຄ້ອນໄຮ່ຄ້ອງ | ສຽງຫ້າວປ່າວພົນ |
| ແຕ່ນັ້ນຍົດງຍ້າຍ | ປະຄືອອກອວນທາງ (27) |
| ພົນຫລວງຫລາຍ | ຫຼັ່ງໄຫລປານນ້ຳ |
| ອັນວ່າ ພົນຫານຫ້າວ | ຖືປືນໄປກ່ອນ |
| ບໍ່ຮູ້ກີຊ່ຳຫ້າວ(28) | ເຫຼືອລົ້ນອະເນກນອງ |
| ສຽງໂຫ່ຮ້ອງ | ທັງກອງມວນມີ |
| ຂຸນໃຫ່ຍຂຶ້ນຂີ່ຊ້າງ | ຕົວກ້າຂີ່ມພົນ |
| ສິນໆຂ້ວາມ | ນາພຽງທົ່ງໃຫ່ຍ |
| ຂ້ວາມດ່ານດ້າວ | ເຖິງເທົ້າຂອບເມືອງ |
| ກໍ່ຈຶ່ງຕັ້ງທັບໄວ້ | ຄ້າຍໃຫ່ຍຖວງງ |
| ດູຍາວສຸດ | ຊົ່ວຕາເຕັມຢຽມ/ |
| ຂຸນກໍ່ເຕີນເຂົາໃຫ້ | ຫາມປືນນ້ຳມອກໃຫ່ຍ |
| ຍິກກ່າຍໄວ້ | ປາຍຊີ້ສູ່ບົນ |
| ບັດນີ້ ຈັກກ່າວເຖິງເສໂນຮຸ້ງ | ຜົວເມັຽຕົວໃຫ່ຍ |
| ມັນກໍ່ບິນເຜັ່ນຜ້າຍ | ພາຍລ້ຳລວງມາ |
| ມັນຫຼິງເຫັນໂຍທາຫ້າວ | ຈັກຊິນເມືອງໃຫ່ຍ |
| ເດັ່ງລະດາດລົ້ນ | ເຕັມຄ້າຍອະເນກນອງ |
| ແຕ່ນັ້ນເສໂນຮຸ້ງ | ຈາເມັຽຊົມຊື່ນ |
| " ຮາຈັກລຸລາບລົ້ນ(30) | ຈິງແທ້ກວ່າຫຼັງ " |
| ແຕ່ນັ້ນ ຝູງໝູ່ໂຍທາຢຽມ | ຄອຍເຫັນຕົກຄະນ່າ |
| ໂຕໃຫ່ຍແທ້ | ປະມານດ້າມທໍ່ພູ |
| ຫຼິງເຫັນຕາແດງເຂັ້ມ | ສະເໜີໄຟເຕົາໃຫ່ຍ |
| ຫຼິງດູປີກແຜ່ກຸ້ມ | ຕາເວັນໄວ້ມືດມົວ |
| ແຕ່ນັ້ນແສນເມືອງພ້ອມ | ຂຸນນາງຖ້ານໃຫ່ຍ |
| ຄ້ອນໄຮ່ຄ້ອງ | ກອງພ້ອມຄື້ນເຄັ່ງ |

ເຂົາກໍ່ຍິງປືນພ້ອມ ພູຫລວງເຟືອນຝັ່ງ (31)
ສຽງຄື້ນເຄົ້າ ວຽງກ້ວາງສູ່ພາຍ
ຄວັນດິນກົ້ວ ເມື່ອບິນບົດມືດ
ລູກປືນເລີຍຫຼີກເວັ້ນ ໄກຮຸ້ງບໍ່ຖອງ
ກໍ່ເພື່ອເຕໂຊແກ້ວ ມະນີໂຊດວງປະເສີດ
ຮຸ້ງເລີຍບໍ່ຢ່ອນຢ້ານ ຈິງແທ້ທໍ່ໃຍ
ມັນຈຶ່ງໄຊຄໍາຕ້ານ ອາຈາກອຍກ່າວ
ສູຈັກເປັນເຫຍື່ອທ້ອງ ກູແທ້ບໍ່ສິງ
ຄ້ອມວ່າແລ້ວ ກໍຜັນດ່ວນລົງມາ
ຈັບເອົາຄົນ ຈີກກິນມີຊ້າ.
ແຕ່ນັ້ນພົນຫຼວງທ້າວ ໂຍທາແຕກຕື່ນ
ລາງຄົນໂຕນຈາກຊ້າງ ບິບຟ້າວແລ່ນໜີ
ເຂົາກໍ່ໄລລາຖິ້ມ ທັງປືນງ້າວຫອກ
ບິບຟັ່ງຟ້າວ ໄປຊຶ້ນຟຸ່ມເຟືອຍ
ອັນວ່າເສໂນຮຸ້ງ ກິນຄົນໝົດມາກ
ມັນຈຶ່ງຄາຍດູກໄວ້ ສູງຂຶ້ນທໍ່ພູ.

ເມື່ອຮຸ້ງຍັກທັງສອງໄດ້ກິນອີ່ມທ້ອງອີ່ມໄສ້ພໍໆແລ້ວ ແລະ ກ່ອນພວກມັນຈະບິນກັບໄປສູ່ຄີລີວົງກົດຂອງມັນ ພວກມັນເລີຍເອີ້ນສັ່ງວ່າ: ອີກເຈັດວັນຈະກັບມາກິນຄົນໃຫ້ສ້ຽງທັງເມືອງ ໂດຍບໍ່ໃຫ້ເຫຼືອຈັກຄົນເລີຍ.

ບັດນີ້ ບ້ານເມືອງຕົກຢູ່ໃນສະພາວະຄັບຂັນ ພຣະຍາໃຫ່ຍຈັກຂິນ ຮູ້ວ່າຮຸ້ງຕ້ອງກັບມາກິນຄົນໝົດທັງເມືອງໃນອີກເຈັດວັນ ພົນໂຍທາໄທກ້າໄທຫານ (34) ທີ່ປະກອບດ້ວຍອາວຸດຄຸດແສງທັງປືນນ້ອຍປືນໃຫ່ຍອັນເປັນທີ່ເກງຂາມຂອງບັນດາປະເທດໃກ້ຄຽງ ກໍ່ບໍ່ສາມາດເຮັດຫຍັງໃຫ້ມັນໄດ້ ແຖມຍັງແຕກຊະນະໂມເປັນເຫັ່ງອທ້ອງເຫັ່ງອພຸງຂອງມັນໝົດ. ເມື່ອຖາມຫາຜູ້ມີອິດທິລິດເກ່ງກ້າສາມາດ ເພື່ອທີ່ຈະສູ້ກັບມັນກໍ່ບໍ່ມີ ດັ່ງນັ້ນ ເມື່ອຮູ້ວ່າແນວໃດກໍ່ຈະຕ້ອງຕາຍດັບວາຍໝົດສູ່ຄົນທັງເມືອງພຣະອົງຈຶ່ງເປີກສາຫາລືນໍາພຣະມະເຫສີຂອງພຣະອົງພ້ອມດ້ວຍເສນາອາມາດທັງມວນວ່າ: ໜ້າຮືໜ້າຈີຕາຍໄປທຸກຄົນແທ້ກໍຂໍໃຫ້ມີຜູ້ລອດ

ຕາຍເພື່ອຈະສືບໜໍ່ແທນແນວໃນພາຍໜ້າ ຈຶ່ງໄດ້ຕົກລົງເອົາຣາຊະທິດາຂອງພຣະອົງ ຊື່ ນາງ ປະທຸມມາ (35) ເຂົ້າໄວ້ໃນກອງຫລວງຂອງພຣະຣາຊະວັງ ພ້ອມດ້ວຍສັບພະສິ່ງຂອງກິນ ທີ່ຈຳເປັນພໍໃຫ້ກຸ້ມສາມເດືອນ ຫວັງວ່າມີຜູ້ມີບຸນມາພົບພໍ້ກໍ່ພອຍຈະລອດຈາກອົດຕາຍໄດ້. ນາງນ້ອຍປະທຸມມາໄດ້ວິງວອນນຳພໍ່ແມ່ເພື່ອຂໍຕາຍດອມດ້ວຍກັນ ແຕ່ໃນທີ່ສຸດກໍ່ຕົກລົງເຂົ້າໃນກອງເພື່ອເຫັນແກ່ຄວາມວິງວອນຂອງອົງບິດາມານດາ ອີກເຈັດວັນຕໍ່ມາຮຸ່ງເຍັນສອງຜົວເມັຍກໍ່ກັບຄືນມາເລາະກິນຄົນທັງເມືອງພ້ອມດ້ວຍສັດສາວາສິ່ງທັງໝົດບໍ່ຫຼໍ່ ຍັງເຫຼືອແຕ່ ນາງ ປະທຸມມານ້ອຍຢູ່ໃນກອງແຕ່ຄົນດຽວ.

ບັດນີ້ ຈັກຂໍກ່າວເຖິງມະຫານະຄອນປັນຈາທີ່ຊົງຄວາມເຊັ່ງຊື່ລືນາມໄປທົ່ວຊົມພູທະວີບ (36) ໃນຖານະທີ່ເປັນເມືອງໃຫ່ຍມີປະຊາກອນອັ່ງອໍພໍຕີ້ ມີນັກປາດຣາຊະບັນດິດ ພໍ່ຄ້າຊາວຂາຍ ແລະ ມະຫາເສດຖີທຸກຊ່ຳທີ່ທຳມາຄ້າຂາຍ ຝູງປະຊາຣາຊມີຄວາມສຸຂຊຸ່ມກຸ່ມເຢັນ ມີເຂົ້ານ້ຳປັດໃຈອຸດົມສົມບູນ ບ້ານເມືອງມີຄວາມຈະເລີນຮຸ່ງເຮືອງ ອັນເປັນທີ່ສັນລະເສີນແກ່ແຂກບ້ານແຂກເມືອງ ທັງເປັນຄວາມເອກອ້າງຂອງປະຊາຣາຊະດອນເປັນຢ່າງຍິ່ງ ທັງນີ້ກໍ່ເພື່ອພຣະເຈົ້າຈຸນລານີຜູ້ເປັນອົງມະຫາກະສັດທີ່ປົກຄອງເມືອງດ້ວຍທຳນອງຄອງທັມໂດຍຍຶດໝັ້ນທົດສະຣາຊສິບປະການເປັນທີ່ເພິ່ງ ນຳເອົາຄວາມເປັນທັມຕູ້ມໄພ່ຟ້າຂ້າແຜ່ນດິນໃຫ້ຢູ່ເຢັນເປັນສຸຂທຸກຄົນ.

ວັນໜຶ່ງ ອິນພົມຍົມມະຣາຊໄດ້ມາດົນບັນດານໃຫ້ພຣະອົງເກີດອາການຮ້ອນອູ່ຫຸນຫວາຍ ບໍ່ສຳບາຍເນື້ອໃນສຳບາຍກາຍຄຶດຢາກໄປເຊີດເນື້ອໃນປ່າໄພສົນ ໃນວົງກົດເຂດດົງແດນກ້ວາງ. ເມື່ອມີຄວາມປະສົງພຣະໄທເຊັ່ນນັ້ນພຣະອົງຈຶ່ງມີອາດໃຫ້ເສນາອາດມາດ ຈັດກຽມຂະບວນຕາມການປະພາດຂອງພຣະອົງ ທັນທີພຣະອົງໄດ້ພາຂະບວນເຊີດເນື້ອເດີນເຂົ້າໄປໃນປ່າໃຫ່ຍດົງເລິກ ບ່ອນທີ່ມີສັດສາວາສິ່ງນາໆຊະນິດໃຫ້ເລືອກຫາມາສ້າຊຸມກັນໄດ້ຕາມໃຈປະສົງ. ຂະບວນເຊີດເນື້ອຂອງພຣະອົງເດີນເລິກເຂົ້າໃນວົງກົດປ່າໃຫ່ຍຊັກໄຊ້ອັນເຮັດໃຫ້ພຣະອົງຮູ້ສຶກສຳບາຍເນື້ອສຳບາຍກາຍມີຄວາມຊົດຊື່ນລື່ນເລີງຂຶ້ນ. ຫຼາຍມື້ຫຼາຍວັນຜ່ານໄປ ມາໃນວັນໜຶ່ງເທວະດາເລີຍມາກັບເພດເປັນກວາງຄຳໂຕງາມໆແລ່ນກາຍພຣະພັກ (37) ຂອງພຣະອົງເຮັດໃຫ້ພຣະອົງກະສັນ (38) ພຣະໄທ ຄຶດຢາກໄດ້ ຈຶ່ງໄດ້ຊົງສັ່ງໃຫ້ຂະບວນແຫນ (39 ) ຂອງພຣະອົງພັກເຊົາກັບທີ່ ສ່ວນພຣະອົງກໍ່ທົງມ້າຂາວຂອງພຣະອົງໄລ່ຕິດຕາມຫວັງຈະຈັບເອົາກວາງຄຳໂຕນັ້ນໃຫ້ໄດ້ ກວາງຄຳໄດ້ພາພຣະອົງເດີນເຂົ້າປ່າເລິກໄປໄກຈົນຫຼົງທາງ ພຣະອົງເດີນດົງຄົນດຽວຈົນໃນທີ່ສຸດກໍ່ຈຳເຂດເມືອງຈັກຂິນທີ່ຫວ້າງເປົ່າ

ແລ້ວກວາງຄຳໂຕນັ້ນກໍ່ມະຣັບມະຫາຍໄປທາງໃດກໍ່ບໍ່ຮູ້. ພຣະອິງເດີນເຂົ້າໄປໃນເມືອງຮ້າງແຫ່ງນັ້ນດ້ວຍຄວາມແປກປະຫລາດທີ່ບໍ່ເຫັນຜູ້ຄົນບໍ່ເຫັນສັດສາວາສິ່ງແຕ່ປະການໃດ ແຕ່ທຸກຢ່າງຍັງຢູ່ໃນສະພາບເໝືອນມີຄົນຢູ່ສັນເກົ່າ ແຕ່ເຫັນກອງກະດູກຄົນ ແລະ ສັດກອງໃຫ່ຍມະຫຶມາ (40) ຊ່ຳໜ່ວຍພູເຂົາກ້າ.

" ອັນນີ້ຈັກວ່າເກີດພາກຮ້າຍ(41) ຜີຫ່າກິນໝົດນັ້ນລື
ຫຼືວ່າ ເຂົາກິນສັງ ເບື່ອເມົາຕາຍມ້ວຍ "
ແຕ່ນັ້ນ ພຣະກໍ່ເດີນໄປໜ້າ ເມີນດູຫຼິງຫຼ່ຳ
ເຫັນໝູ່ຜາສາດຕັ້ງ ເຫຼືອງເຫຼື້ອມຮຸ່ງເຮືອງ
ແຕ່ນັ້ນພຣະກໍ່ຜາຍຕີນເຂົ້າ(42) ໃນວັງຫຼິງຫຼ່ຳ
ກໍ່ບໍ່ມີຜູ້ອື້ ໄອແທ້ກ່ຳເຢັນ
ເຫັນແຕ່ທິວຄົນກິ້ງ ເຕັມໂຮງເດັງລະດາດ
ກໍ່ຫາກເຕັມແຜ່ນພື້ນ ວັງກ້ວາງສູ່ພາຍ (43)
ແຕ່ນັ້ນ ເຈົ້າກໍ່ຜັນຍັງມ້າ ໄປດູຫຼິງຫຼ່ຳ
ສິ່ງພຸ້ນພີ້ ບໍ່ເຫັນແທ້ໝູ່ຄົນ
ເຫັນແຕ່ກອງຫລວງທ້ອຍ ລຽນໂຮງກ້ວາງໃຫ່ຍ (44)
ພຣະຈິ່ງຢຽວຢ່ອງຢີ້ ມີຂຶ້ນຕ່ອຍຕີ
ແຕ່ນັ້ນ ປະທຸມມານ້ອຍ ໃນກອງຕ້ານປາກ
"ມຶງຈິ່ງມາກິນທ້ອນ ຜີເຍນຮຸ້ງໃຫ່ຍ
ກູຈັກທານທອດໃຫ້ ວາງເນື້ອແກ່ມຶງແທ້ແລ້ວ "

ຄັນພຣະອິງໄດ້ຍິນສຽງມະນຸດ ດັງອອກມາຈາກໃນກອງຫລວງໜ່ວຍນັ້ນແລ້ວ ພຣະອິງກໍຖອດງ້າວແທກໜ້າກອງ ຈຶ່ງເຫັນນາງນ້ອຍປະທຸມມາ ລີ້ສັ່ນສາຍມຸບໜ້າໄຫ້ຢູ່ໃນກອງຄິດວ່າແມ່ນຮຸ້ງຍັກຈະມາກິນ. ແຕ່ນັ້ນພຣະບາດເຈົ້າຈຶ່ງຈາກ່າວຕ້ານບອກວ່າ "ບໍ່ແມ່ນຜີຍັກເຍນມາແຕ່ໃສເລີຍ ແຕ່ແມ່ນມະນຸດເຮົາ" ແລ້ວກໍຈາໃຫ້ນາງອອກມາຈາກກອງເພື່ອຖາມຫາກົກປາຍສາຍເຫດ ທີ່ເປັນມາຂອງເຄາະເຂັນເອັນຮ້າຍອັນເປັນສາເຫດໃຫ້ຜູ້ຄົນມຸດມອດໄປທັງເມືອງ. ແຕ່ນັ້ນນາງປະທຸມມາ ຈຶ່ງເລົ່າເລື່ອງລາວທີ່ເປັນມາສູ່ພຣະອິງຟັງທຸກປະການ.

" ບັດນີ້ເປັນເຂັນຂ້ອນ ອິນຕາຍບັງເກີດ
ເປັນເຫດຮ້າຍ ຜີຮຸ້ງທ່ຽວກິນ
ອັນແຕ່ໃນເມືອງກວ້າງ ມັນກິນປັດຂອດ
ກໍບໍ່ມີຜູ້ຫລໍຢູ່ຄ້າງ ເມືອງນີ້ເປົ່າດາຍ
ຍັງແຕ່ຕົວດຽວຂ້າ ໃນກອງລີ້ຢູ່
ພໍ່ແມ່ເອົາເຊື່ອງໄວ້ ຍັງຄ້າງບໍ່ຕາຍ "
ແຕ່ນັ້ນເຈົ້າກໍໂຊມເອົາແກ້ວ ກອງແພງໂລມລູບ
ສີແຈ່ມເຈົ້າ ມາຍໜ້າຊື່ນຊົມ
ຣາຊາເຈົ້າ ຈາບາງຄຳມ່ວນ
" ບັດນີ້ພີ່ຈັກເອົາຍັງເຈົ້າ ຄຳກອງເປັນຄູ່ຮຽມແລ້ວ
ພີ່ນີ້ຫາກແມ່ນເຊື້ອໜໍ່ຟ້າ ເມືອງໃຫຍ່ນະຄອນຫຼວງທີ່ພຸ້ນ
ພີ່ຈັກເອົາໄປເປັນເທວີ ຢູ່ໂຮງປາງແກ້ວ
ອັນວ່າເມືອງຫຼວງອ້າຍ ອັກຄີທີ່ງຢູ່
ພີ່ຈັກເອົາໄປຕື່ມຊ້ອນ ເປັນເທງົ້າຜ່າສອງ "

ພຣະເຈົ້າຈຸນລະນີ ໄດ້ເອົານາງປະທຸມມາ ມາເປັນເທວີຢູ່ຜາສາດຣາຊະວັງເມືອງປັນຈາມະຫານະຄອນ ໂດຍຕັ້ງຊື່ໃໝ່ໃຫ້ວ່າ ນາງຄຳກອງ ຕັ້ງແຕ່ບັດນັ້ນເປັນຕົ້ນມາ ແລະ ກໍ່ຕັ້ງແຕ່ບັດນັ້ນມາເຊັ່ນກັນ ທີ່ພຣະເຈົ້າຈຸນລະນີໄດ້ໃຫ້ຄວາມຮັກໃຄ່ໃກ້ຊິດ ນາງ ຄຳກອງ ຫຼາຍກວ່າມະເຫສີອົງເຄົ້າ ອັນເຮັດໃຫ້ພຣະອົງມີຄວາມຫິງຫວງ ແລະ ຄວາມອິດສາເກີດຂຶ້ນ. ພໍເຖິງຂວບປີທີ່ນາງຄຳກອງມາຮ່ວມໂຮງ ນາງກໍ່ມີຄັບທ້ອງ ແລະ ເມື່ອເຖິງສິບເດືອນກໍ່ຈະເຖິງເວລາປະສູດຣາຊະບຸດອອກມາ ອັນຍິ່ງເຮັດໃຫ້ພຣະມະເຫສີອົງຫຼວງຕ່ຳຄ້ອຍນ້ອຍໃຈ ທີ່ຕົນເອງບໍ່ສາມາດມີບຸດໄດ້ ແຕ່ແມ່ນນາງຄຳກອງຜູ້ເປັນນ້ອຍທີ່ຈະມີບຸດ ເພື່ອຈະສືບຣາຊະວົງຕໍ່ໄປ. ເມື່ອຄຶດເຖິງບ່ອນນີ້ ນາງກໍ່ຍິ່ງໜ້າມືດຕາລາຍຢ່າງບໍ່ໄດ້ຄຳນຶງຫາບາບບຸນຄຸນໂທດ ທີ່ຈະຕາມມາສະໜອງແຕ່ຢ່າງໃດເລີຍ. ນາງທຳທ່າທຳຕົນເປັນຄົນດີ ເປັນຮ່ວງເປັນໃຍນຳນາງຄຳກອງ ຄອຍໃຫ້ຄຳແນະນຳຕັກເຕືອນສະເໝີເວລາທີ່ງຄັບ. ແຕ່ພ້ອມກັນນັ້ນນາງກໍ່ໄດ້ມີແຜນອັນຕ່ຳຊ້າຂອງນາງຄືຈະຕ້ອງກຳຈັດລູກຂອງນາງຄຳກອງ ແລະ ໂຕນາງຄຳກອງໃຫ້ໄດ້ດ້ວຍວິທີທີ່ແນບນຽນໃດໜຶ່ງ. ຄັ້ນແລ້ວເມື່ອເຖິງວັນ ແລະ ເວລາທີ່ນາງຄຳກອງ ເຈັບທ້ອງກຽມຈະປະສູດລູກອອກມາ ນາງອັກຄີກໍ່ເອົາເງິນປິນໝໍຕຳແຍ ແລະ ສາວສະໜົມຮັບໃຊ້ໃຫ້

ໄປຊອກເອົາໝານ້ອຍມາປ່ຽນລູກນາງຄຳກອງ ແລ້ວໃຫ້ເອົາລູກນາງຄຳກອງໃສ່ໄຫໄຫຼນ້ຳ.

ນາງອັກຄີໄດ້ອອຍນາງຄຳກອງດ້ວຍວາຈາອ່ອນຫວານ ພ້ອມທັງເອົາຜ້າມາມັດຕານາງໂດຍອ້າງວ່າ ນາງຄຳກອງ ບໍ່ເຄີຍເກີດລູກມາກ່ອນ ບໍ່ທັນເຄີຍເຫັນເລືອດເຫັນຢາງ ຢ້ານວ່າຈະຕົກໃຈເປັນລົມ ນາງຄຳກອງຄຶດວ່າແມ່ນຄວາມຫວັງດີຂອງນາງອັກຄີຈຶ່ງປະຕິບັດຕາມ

ແຜນການຂອງນາງອັກຄີສຳເລັດ ນາງຄຳກອງເກີດລູກພາບດຽວສີ່ຄົນ ຮຽກວ່າສີ່ກຸມມານ ແຕ່ນາງບໍ່ໄດ້ເຫັນໜ້າເລີຍເພາະຜ້າອັດຕາຢູ່ ທັນໄດ້ຍິນແຕ່ສຽງແກກໄຫ້ໜ້ອຍດຽວ ແລ້ວກໍຖືກເຂົາເອົາໝານ້ອຍມາເກືອກເລືອດປ່ຽນ ແລ້ວເອົາກຸມມານທັງສີ່ໃສ່ໄຫໄຫຼນ້ຳ. ເມື່ອເຂົາໄຂຜ້າອັດຕາອອກນາງຈຶ່ງເຫັນວ່າເຂົາເອົາໝາມາປ່ຽນລູກຂອງຕົນ ນາງຈຶ່ງຮ້ອງໄຫ້ຈົນສະຫຼົບເປັນລົມໄປ.

ນາງອັກຄີໄດ້ນຳເອົາເຫດການດັ່ງກ່າວໄປຟ້ອງຕໍ່ພຣະສາມີຄືພຣະຍາຈຸນລະນີວ່າ "ຮ້ອຍທີ່ນາງຄຳກອງ ໄປສູ້ສົມກັບໝາ ຈຶ່ງເກີດລູກມາເປັນໝາ". ພຣະຍາຈຸນລະນີໂກດກ້າວຈຶ່ງຈຳໃຫ້ເສນາທັນເອົານາງຄຳກອງໄປລົງໂທດ ເປັນຜູ້ລ້ຽງໝູໃຫ້ຈ່າລ້ຽງໝູ. ນາງຄຳກອງຖືກບັງຄັບໃຫ້ໄປຕັດບອນຕົ້ມບອນ ເກືອໝູນັບຮ້ອຍ ເຮັດອານາໄມຄວາມສະອາດທົນທຸກທໍລະມານດ້ວຍຄວາມອາພັບອັບເສົ້າ ເສື້ອຂາດໜ້າຜ້າຂາດຫລັງ ໜ້າຕາເຮີະຮ້າຍ ຊຸດໂຊມຈ່ອຍຜອມ ນ້ຳຕານອງໜ້າດ້ວຍຄວາມກິນແນງແຄງໃຈ ແລະ ໂສກເສົ້າເສັຍໃຈ.

ບັດນີ້ຈັກກ່າວເຖິງສີ່ກຸມມານນ້ອຍທີ່ນາງອັກຄີ ເອົາໃສ່ໄຫໄຫຼນ້ຳ ເລີຍໄຫຼໄປເວີນຢູ່ທ່ານ້ຳຂອງສອງເຖົ້າຜົວເມັຍທີ່ຮັກສາອຸດທິຍານຂອງ ພຣະມະຫາກະສັດ ເມືອງໃຫຍ່ປັນຈາ. ສອງເຖົ້າໄດ້ນຳເອົາເມືອພຽນລ້ຽງເປັນລູກດ້ວຍຄວາມດີໃຈເຫຼືອທີ່ສຸດທີ່ຍັງບໍ່ໄດ້ ເພາະພັດແຕ່ເອົາກັນມາຈົນເຖົ້າຈົນແກ່ກໍ່ບໍ່ມີລູກນຳເພິ່ນ. ຂ່າວສອງເຖົ້າຈຳສວນໄດ້ລູກນ້ອຍສີ່ຄົນ ໄດ້ແຜ່ສະພັດໄປຊອດຫູນາງອັກຄີ ນາງອັກຄີຈຶ່ງແຕ່ງຄົນມາສືບເບິ່ງ ຮູ້ວ່າແມ່ນລູກນ້ອຍຂອງນາງຄຳກອງທີ່ຢູ່ໃນໄຫໄຫຼນ້ຳແທ້ ນາງຈຶ່ງແຕ່ງອຸບາຍເອົາງ້ວນໃສ່ເຂົ້າໜົມມາຍົວະໃຫ້ເດັກນ້ອຍກິນເວລາສອງເຖົ້າຈຳສວນບໍ່ຢູ່. ສີ່ກຸມມານຈຶ່ງຕາຍໄປ ອັນໄດ້ນຳເອົາຄວາມໂສກເສົ້າເສັຽໃຈບໍ່ແລ້ວມາສູ່ສອງເຖົ້າຈຳສວນ. ສອງເຖົ້າໄດ້ເອົາສົບຂອງລູກທັງສີ່ໄປມ້ຽນຄາບສົ່ງສະການ ໂດຍກໍ່ກອງຟອນຈູດ ແລ້ວຝັງໄວ້ແຈສວນແຫ່ງໜຶ່ງ. ທຸກຄ່ຳເຊົ້າສອງເຖົ້າເອົາເຂົ້າຕອກດອກໄມ້ໄປບູຊາ ແລະ ປາຖະໜາໃຫ້ລູກໄປເກີດທີ່ດີເຖິງສຸກ. ຢູ່ຕໍ່ມາເລີຍມີຕົ້ນຈຳປາສີ່ຕົ້ນເກີດຂຶ້ນທີ່ຫລຸມຝັງສົບຂອງກຸມມານທັງສີ່ ເກີດເປັນດອກສີສັນງົດງາມແຕກຕ່າງກັນ.

ສອງເຖົ້າຈຶ່ງດີໃຈເບິ່ງແຍງບົວລະບັດຢ່າງດີທຸກມື້ ຮູ້ວ່າຈຳປາສີ່ຕົ້ນນັ້ນແມ່ນລູກຂອງຕົນ(45). ຂ່າວຄາວທີ່ສອງເຖົ້າຈຳສວນໄດ້ຕົ້ນດອກໄມ້ປະຫຼາດສີ່ຕົ້ນອັນມີສີສັນງົດງາມແຕກຕ່າງກັນພິເສດ ໄດ້ເມື່ອຊອດຫູນາງອັກຄີອີກ ນາງອັກຄີຈຶ່ງແຕ່ງຄົນໃຊ້ພ້ອມດ້ວຍທະຫານຕຳຫຼວດອົງຄະລັກນາງມາທຳລາຍເສັຽ. ສອງເຖົ້າຜົວເມັຽໄດ້ໜ່ວງໜ່ຽວຂໍວອນບໍ່ໃຫ້ທຳລາຍລູກຂອງຕົນ ແຕ່ເຂົາກໍ່ບໍ່ຟັງ ສອງເຖົ້າໄດ້ແຕ່ຮ້ອງໄຫ້ຮ່ຳໄຮດ້ວຍຄວາມທຸກໂສກ. ຈຳປາສີ່ຕົ້ນນັ້ນຖືກເຂົາເອົາໄປໂຍນຖິ້ມລົງນ້ຳ ແລ້ວຈຶ່ງໄຫຼໄປເວີນຢູ່ທ່າຂອງພຣະລືສີຕາໄຟ ພຣະລືສີຜູ້ເພິ່ນສອດສ່ອງສໍລະຍານ (46) ເຫັນວ່າຈຳປາສີ່ຕົ້ນນັ້ນ ແມ່ນໜໍ່ໂພທິສັດ (47) ລົງມາເກີດໄຊ້ຊາດ ຈຶ່ງເອົານ້ຳເຕົ້າແກ້ວທິດກາຍເກີດມາເປັນສີ່ທ້າວທີ່ມີໜ້າຕາງາມຍິ່ງຍ້ອຍ ເໝືອນດັ່ງອິນຊຽນ.

| | |
|---|---|
| - ຜູ້ພີ່ນັ້ນ | ຊື່ເສດຕະຣາຊກຸມມານ |
| ຕາມດວງດອກສີຂາວ | ຊື່ນາມເປັນອ້າຍ |
| ຖັດມານັ້ນ | ສີເຫຼືອງເນື້ອອ່ອນ |
| ຊື່ວ່າຈິດຕະຣາຊນ້ອຍ | ເປັນນ້ອງຖ້ອນສອງ |
| ຖັດມານັ້ນ | ສີແດງເນື້ອອ່ອນ |
| ຊື່ວ່າສຸວັນນະຣາຊກຸມມານ | ໂສມງາມປານແຕ້ມ |
| ອັນວ່າໂສມສະອາດທ້າວ | ນ້ອງຫຼ້າຄົນບຸນ |
| ຊື່ວ່າເພັດຊະຣາຊນ້ອຍ | ບັນທະຣາຊກຸມມານ |
| ສົມພານມີ | ໂລກລືທັງຄ້າຍ. |

ຜູ້ນ້ອງຫຼ້ານັ້ນມີນິ້ວຊີ້ກຸດຍ້ອນວ່າ ສາມະເນນໄດ້ເດັດເອົາດອກຈຳປາດອກໜຶ່ງ. ສີ່ທ້າວດຳລົງຢູ່ນຳພຣະລືສີຈົນໃຫຍ່ຊອນບ່າວ ພຣະລືສີຈຶ່ງສອນສາຕະສິນອາຄົມໃຫ້ ມອບດາບສີຄັນໄຊ ຄ້ອນຕະບອງເພັດອັນມີລິດເດັດຍິ່ງໜັກໜາ ໃຫ້ທ້າວທັງສີ່ ສ່ວນທ້າວນ້ອງຫຼ້ານັ້ນ ພຣະລືສີກໍ່ເອົາເຜີ້ງມາຕໍ່ນິ້ວໃຫ້ ແລ້ວເສກໃຫ້ມີອິດທິລິດຊີ້ໃຫ້ມຸດກໍ່ມຸດ ຊີ້ໃຫ້ເກີດກໍ່ເກີດຄືນໄດ້ ດັ່ງນີ້ເປັນຕົ້ນ.

ເມື່ອສີ່ກຸມມານ ຫຼື ທ້າວຈຳປາສີ່ຕົ້ນໃຫຍ່ຂຶ້ນມາ ແລະ ໄດ້ສຳເລັດການຮຽນຮູ້ ສາຕະສິນອາຄົມ (48) ມີລິດທີເກັ່ງກ້າ ສາມາດຜາບແພ້ມານຮ້າຍທຸກປະເພດທຸກພັນ ບໍລິບູນທຸກຢ່າງແລ້ວ ແລະ ເມື່ອພຣະອິນພິມຍົມມະຣາຊ ຕັດສ່ອງສໍລະຍານ ເຫັນວ່າ ນາງຄຳກອງ

ຜູ້ເປັນມານດາໄດ້ທົນທຸກທໍລະມານຢ່າງບໍ່ໄດ້ຮັບຄວາມເປັນທັມແຕ່ຢ່າງໃດ ຈຶ່ງສົມຄວນໃຫ້ສີ່ກຸມມານໄປຊ່ອຍກອບກູ້ເອົາຖານະຂອງຜູ້ເປັນມານດາໃຫ້ຄືນມາສັນເກົ່າ ພຣະອິງຈຶ່ງນິລະມິດເປັນຕາຜ້າຂາວນຳສະເພົາຄຳມາຮັບເອົາສີ່ກຸມມານ ກັບຄືນໄປສູ່ເມືອງປັນຈາ. ຕາມເສັ້ນທາງເດີນສະເພົາຕາມລຳແມ່ນ້ຳຄຸງຄານັ້ນ ກຸມມານທັງສີ່ໄດ້ຜ່ານຜ່າອຸປະສັກດ່ານຍັກດ່ານເຍນ ຜ່ານການສູ້ຮົບຕົບຕີເອົາຊະນະໄດ້ທຸກຢ່າງແລ້ວ ຈຶ່ງໄດ້ເມືອເຖິງເມືອງປັນຈາມະຫານະຄອນອັນເປັນເມືອງພຣະບິດາ ແລະ ມານດາຂອງພຣະອົງທັງສີ່. ສີ່ກຸມມານໄດ້ພາກັນນຳສະເພາະຈອດທີ່ທ່ານ້ຳຂອງ ເຖົ້າຈຳສວນສອງຜົວເມັຽ ເພື່ອຄາລະວະສົມບັດສົມມາ ອັນເປັນພຣະບິດາ ມານດາລ້ຽງຂອງຕົນ ພ້ອມທັງເອົາສອງເຖົ້າເຂົ້າສະເພົານຳເມື່ອຈອດ ໃນເວລາກາງຄືນຢູ່ກາງໄລນ້ຳ ເຊິ່ງທ່າພະຣາຊະວັງຫຼວງຂອງພຣະຍາ ຈຸນລະນີ ອັນເປັນພຣະບິດາອົງໃຫ້ກຳເນີດແກ່ຕົນ. ຈາກນັ້ນ ກໍແຕ່ງໃຫ້ທ້າວເພັດຊະຣາຊຜູ້ເປັນນ້ອງຫຼ້າປະຕິບັດການ. ເພັດຊະຣາຊກຸມມານໄດ້ສະແດງອິດທິລິດເອົາປູນໄປກ່ານຄໍເສນາອາມາດ ແຕ້ມໜ້ານາງອັກຄີ ແລະ ຜູ້ເປັນບິດາພ້ອມທັງຂຽນຂໍ້ຄວາມໄວ້ວ່າໃຫ້ເອົານາງຄຳກອງໄປສົ່ງທີ່ສະເພົາ ແລະ ເມື່ອຕອນຮຸ່ງເຊົ້າມາ ທ້າວກໍ່ໄປຊອກຫາຜູ້ເປັນມານດາ ຈຶ່ງພົບຂະນະກຳລັງຕັດບອນຢູ່ແຄມເປື່ອມໜອງ ພ້ອມດ້ວຍກອຍເປັນາງ ທ້າວຈຶ່ງຂົນຂວາຍເອົາແມ່ມາຍັງສະເພົາພ້ອມທັງໃຫ້ຊຳລະເນື້ອກາຍຖ່າຍສົ້ນເສື້ອທີ່ຂາດສ້ອຍ ແລະເປື້ອນເປິະ. ຜູ້ຄົນໃນວັງນັບທັງພຣະຣາຊາ ນາງມະຫາເທວີ ເສນາອາມາດ ພ້ອມດ້ວຍພວກສະໜົມກົມມະວັງ ຕື່ນຂຶ້ນມາດ້ວຍຄວາມປະຫຼາດເຫັນປູນກ່ານຄໍ ກ່ານໜ້າ ກ່ານຕາ ພ້ອມທັງເຫັນຂໍ້ຄວາມຈຳໃຫ້ເອົານາງຄຳກອງໄປສົ່ງທີ່ສະເພົາ ຈຶ່ງຕົກສະທ້ານສົນເທໄປຕາມໆກັນຮູ້ວ່າຕ້ອງມີຜູ້ມີລິດເກັ່ງກ້າສົມພານສູງເລີດຄົນ ຈຶ່ງສາມາດເຮັດສິ່ງນີ້ໄດ້. ພ້ອມກັນນັ້ນເມື່ອຊາວບ້ານຊາວເມືອງລົງທ່າກໍພົບເຫັນສະເພົາຄຳສີ່ເຫຼັ້ມຈອດຢູ່ ຈຶ່ງຮີບເມືອຂາບບັງຄົມທູນພຣະລາຊາເຖິງເຫດການອັນເປັນໜ້າອັດສະຈັນນີ້. ພຣະລາຊາຈຶ່ງຕັດສັ່ງໃຫ້ຜູ້ຄົນໄປຫານາງຄຳກອງໄປສົ່ງທີ່ສະເພົາ ແຕ່ກໍບໍ່ພົບນາງຄຳກອງ ຈຶ່ງຫາສາວສະໜົມຜູ້ສີຄືໆແດ່ແຕ່ງເພດແລ້ວແຫ່ແຫນລົງໄປທ່ານ້ຳເພື່ອມອບໃຫ້ເຮືອສະເພົາ.

ບັດນີ້ ພຣະບາດເຈົ້າ
ຕົນອາດຈຸນລະນີ
ມີໂອງການ
ບອກຝູງຂຸນເຖົ້າ
ພຣະໃຫ້ເອົານາງແກ້ວ
ຄຳກອງຖວາຍມອບ
ຂໍໃຫ້ພຣະແຜ່ນແຜ້ວ
ບຸນກວ້າງໂຜດຜາຍ

| | |
|---|---|
| ແຕ່ນັ້ນທ້າວຕອບຕ້ານ | ຈາຫມູ່ເສນາ |
| ເຮົານີ້ໄປແຕ່ເມືອງປັນຈາ | ຫຼາຍຂວບປີນານລ້ຳ |
| ບັດນີ້ ເຮົາກໍມາແຕ່ຍອດນ້ຳ | ນັກຄະເຣດຫຼາຍເມືອງ |
| ເພື່ອປະສົງນາງຄຳກອງ | ກໍຈຶ່ງມາຈິງແທ້ |
| ບັດນີ້ຣາຊາເຈົ້າ ຈຸນລະນີ | ຕົນອາດ |
| ພຣະບາດໃຊ້ | ຂຸນເຖົ້າດ່ວນມາ |
| ໃຫ້ເອົານາງແກ້ວ | ຄຳກອງຖວາຍມອບ |
| ກໍ່ຕັ້ງຫາກແມ່ນທັມມະຊາດເຊື້ອ | ຄຳກອງແທ້ທ່ຽງຈິງນັ້ນລື |
| ແຕ່ນັ້ນມອາມາດພ້ອມ | ນົບນອບຍໍມື |
| ຫາກແມ່ນນາງຄຳກອງ | ມອບຖວາຍພຣະອົງເຈົ້າ |
| ແຕ່ນັ້ນພຣະບາດທ້າວ | ໂກຫາກົ້ວໂກດ |
| ເຖົ້ານີ້ມາບໍ່ຮູ້ໂທດເບື້ອງ | ຄຳຮ້າຍທ່ອມຕາຍນັ້ນລື |
| ເຮົາໄດ້ເອົາປູນໝາຍໄວ້ | ໃນຄຳທຸກໝູ່ |
| ເພື່ອວ່າ ເຖົ້າບໍ່ຮູ້ຮີດບ້ານ | ເມືອງແທ້ຊອບທັມ |
| ມາບໍ່ຈຳຄຳເຖົ້າ | ບູຮານສອນສັ່ງ |
| ອັນວ່າຮີດແຕ່ງຕັ້ງ | ມາແທ້ແຕ່ເດີມ |
| ສັງບໍ່ຕາມຄວາມເຖົ້າ | ຄອງເມືອງທົດສະຣາຊ |
| ຄັນວ່າພຣະບາດຜາຍໂຜດແລ້ວ | ຄວນໄດ້ໄຕ່ຕອງ |
| ຄັນວ່າຜິດຊອບແທ້ | ໃຫ້ຮູ້ເຫດໜັກເບົາ |
| ຄວນທີ່ເອົາກັນຕອງ | ໄຕ່ດູເຫັນແຈ້ງ |
| ຈຶ່ງວ່າເປັນຂຸນເຖົ້າ | ເສນານັກປາດ |
| ເປັນຜູ້ສະຫຼາດຮູ້ | ຄອງແທ້ຊອບທັມ |
| ບັດນີ້ ສັງວ່າມາເອົາຂ້າ | ຫາສົມາປ່ຽນຈິງນໍ |
| ມອບໃຫ້ເຮົາດັ່ງນີ້ | ສູນັ້ນໄປ່ຄວນ ແທ້ດາຍ |
| ວ່າເຮົານີ້ເປັນຄົນໂງ່ຮ້າຍ | ບໍ່ຮູ້ທ່ອມຄຳພາງນັ້ນລື |
| ຈຶ່ງໄດ້ເອົານາງມາ | ປ່ຽນກັນລວງຫຼິ້ນ. |
| ບັດນີ້ ສູຈົ່ງເອົາເມືອໃຫ້ | ຈຸນລະນີຕົນອາດ |
| ໃຫ້ໄປຫານາດແກ້ວ | ຄຳກອງນັ້ນຮີບມາ |

ບັນດາ ເສນາເຖົ້າຮູ້ແຫ່ງຄວາມຜິດຂອງຕົນ ກໍ່ພາກັນມີຄວາມຢ້ານກົວສັ່ນສາຍໄປທັງຕົວ ຈຶ່ງກົ້ມຂາບລາເພັດຊະຣາຊກຸມມານ ຮີບກັບເມືອທູນພຣະເຈົ້າຈຸນລະນີ ພຣະຍາຈຸນລະນີຮູ້ວ່າພຣະອົງເອງເປັນຕົ້ນເຫດແຫ່ງຄວາມຜິດໃນການເອົາສາວສະໜົມໄປລວງທ້າວ ກໍ່ຍິ່ງມີຄວາມຢ້ານກົວຈຶ່ງຕົກລົງປົງພຣະໄທ ພາເສນາອາມາດແລະຂະບວນ ແຫ່ໄປຫາທ້າວເພັດຊະຣາຊທີ່ສະເພົາ ເພື່ອຂໍອ່ອນຍອມ ແລະ ມອບເມືອງໃຫ້ແກ່ທ້າວ.

ພໍ່ພຣະອົງຂຶ້ນໄປສູ່ສະເພົາດ້ວຍຄວາມສັ່ນສາຍ ບັນດາກຸມມານທັງສີ່ກໍອັ່ງເຊີນພຣະອົງພໍ່ຂຶ້ນນັ່ງສະຖິດບົນຕຽງຄຳ ແລ້ວພາກັນຂາບໄຫວ້ ອັນເຮັດໃຫ້ພຣະອົງຕົກສະທ້ານສິນເທບໍ່ເຂົ້າໃຈຫຍັງເລີຍ. ແຕ່ນັ້ນບັນດາທ້າວທັງສີ່ ຈຶ່ງເລົ່າເຫດການທຸກປະການຕະຫຼອດການເດີນທາງຜາບມານມາກວ່າຈະເຖິງພຣະອົງພໍ່. ເມື່ອພໍ່ຟັງເຫດການຄວາມຈິງຜ່ານມານຈໍ້ຕາກໍນອງອາບໜ້າເພາະສຳນຶກໃນຄວາມບໍ່ຮອບຄອບຂາດຄວາມພິຈາລະນາຂອງຕົນເອງ ອັນເປັນເຫດໃຫ້ເມັ່ງມິ່ງຄຳກອງໄດ້ຕົກທຸກທໍລະມານ ແສນສາຫັດ ແລະ ລູກຜູ້ປະເສີດຂອງຕົນຖືກລົ້ມຫາຍຕາຍຈາກຫຼາຍເທື່ອຫຼາຍທີ່ນ ພຣະອົງໄດ້ສັ່ງໃຫ້ອາມາດ ເມືອທັນເອົານາງອັກຄີມະເຫສີເຫງົ້າມາສອບຖາມ ເຊິ່ງນາງກໍຮັບສາລະພາບຄວາມຈິງທຸກປະການວ່າ ທຸກຢ່າງທີ່ກະທຳໄປເພາະຄວາມຕໍ່ານ້ອຍຄ້ອຍໃຈ ຄວາມທຶງຫວງອິດສາ. ພຣະຣາຊາຈຶ່ງຕົກລົງໃສ່ໂທດສູງສຸດ ຄື ປະຫານຊີວິດ ແຕ່ຜູ້ເປັນບຸດໄດ້ຂໍຮ້ອງໃຫ້ໄວ້ຊີວິດ ຈຶ່ງໄດ້ຕົກລົງໃຫ້ນາງໄປຮັບເປັນແມ່ຊອກບອນລ້ຽງຫມູນຳຈ່າລ້ຽງຫມູທໍ່ນັ້ນ ພຣະອົງໄດ້ຂໍໃຫ້ນາງຄຳກອງຍົກໂທດໃຫ້ພຣະອົງ ແລະ ຮັບເອົາຖານະເອກອັກຄະມະເຫສີຂອງພຣະອົງ. ແຕ່ເບື້ອງຕົ້ນນາງຄຳກອງ ກໍ່ປະຕິເສດ.

| | |
|---|---|
| "ພີ່ຈັກເອົາຕົນນ້ອງ | ເປັນເທວີເໝືອນເກົ່າ |
| ຂໍໃຫ້ນ້ອງເມືອຢູ່ສ້າງ | ໂຮງກວ້າງແຫ່ງຮາ ພີ່ທ້ອນ" |
| ແຕ່ນັ້ນ ນາງນາດນ້ອຍ | ຄຶດຄຽດມີມາຍ |
| ນາງຈຶ່ງຜາຍວາຈາ | ຕອບຄວາມພຣະອົງເຈົ້າ |
| " ບັດນີ້ຂ້ອຍໄດ້ຕົກເປັນຂ້ອຍ | ທາສີຖ້ານຕ່ຳ |
| ອັນວ່າ ຄົນກຳພ້າ | ຫຽມທ້າວບໍ່ຄວນ ພຣະເອີຍ |
| ແຕ່ກ່ອນ ຜູ້ຂ້າເປັນຊາດເຊື້ອ | ແກ້ວແກ່ນພິລາ |
| ບັດນີ້ ຣາຊາເອົາເປັນຫີນ | ທ່ອນຈິຄືນເປັນແກ້ວ |

| | |
|---|---|
| ອັນໜຶ່ງຄຳຊາວແທ້ | ແດງງາມເນື້ອອ່ອນ |
| ແຕ່ກ່ອນພຣະທ່ອນທ້າວ | ເອົາໄວ້ທີ່ຄວນ |
| ເລີຍເລົ່າຈັບຈ່າຍຊື້ | ຜູງ ໝູ ປູ ປາ |
| ລາຊາຂາຍ | ຈ່າຍໄປເປັນເບັ້ຽ |
| ບໍ່ຄວນເອົາມາໄວ້ | ເປັນຄຳສັນເກົ່າ |
| ຂ້ານີ້ ເປັນດັ່ງຊື້ນເໜົ່າແລ້ວ | ໝອນບ້ອນບຸ່ນກິນ |
| ບໍ່ມີຄວນເອົາຂຶ້ນ | ພານທອງຖວາຍບາດ |
| ເຊີນພຣະເອົາແກ່ນແກ້ວ | ອັກຄີຊ້ອນຮ່ວມຮຽງ ພຣະທ້ອນ" |
| ເມື່ອນັ້ນ ພຣະບາດທ້າວ | ທົງໂສກແສນກະສັນ |
| ເພື່ອວ່າ ກັນລະຍານາງ | ຄຽດພຸນຟຸມຮ້າຍ |
| ພຣະຈຶ່ງອຸບາຍຕ້ານ | ຄວາມດີໂລມອ່ອນ |
| " ຂໍໃຫ້ຊະຊ່ອນເນື້ອ | ນາງແກ້ວຢາພຸນ ພີ່ທ້ອນ |
| ກໍ່ຫາກເປັນແຕ່ເວຣາແລ້ວ | ອັກຄີທຳບາບ |
| ພີ່ຈຶ່ງກຳຣາບໃຫ້ | ນາງແກ້ວໝັ້ນໝອງ |
| ບັດນີ້ ກຳສະໜອງແລ້ວ | ອັກຄີຄືນຖ່ອຍ |
| ມັນກໍ່ເປັນຂ້ອຍໃຊ້ | ແທນແກ້ວພຣະຍອດນາງ |
| ບັດນີ້ ກໍ່ຫາກບຸນເຮົາແລ້ວ | ເຄີຍມາເປັນຄູ່ |
| ພີ່ຈັກເອົາມິ່ງແກ້ວ | ເປັນເຫງົ້າແມ່ເມືອງ ແທ້ແລ້ວ" |

ແຕ່ນັ້ນ ນາງຄຳກອງ ກໍ່ຍັງປະຕິເສດສັນເກົ່າ ອັນເຮັດໃຫ້ພຣະບາດເຈົ້າ ຈຸນລະນີ ທົງໂສກເສົ້າເປັນອັນມາກ. ເມື່ອກຸມມານທັງສີ່ເຫັນຄວາມທຸກໂສກຂອງພະອົງພໍ່ ແລະ ຄວາມບໍ່ຫາຍຄຽດຂອງອົງມານດາ ຈຶ່ງໄດ້ພາກັນຈອບອອຍໃຫ້ຄືນດີກັນ.

| | |
|---|---|
| ບາຈຶ່ງຍໍມືໄຫວ້ | ຈອມທັນພຣະແມ່ |
| ທ້າວຈຶ່ງຜາຍແຜ່ຖ້ອຍ | ໂລມເວົ້າແມ່ຕົນ |
| "ດູລາເຈົ້າ | ມານດາຈອມເກດ ລູກເຮີຍ |
| ຂໍໃຫ້ວິເສດເນື້ອ | ຈ້ອມໄທ້ຈົ່ງຟັງ ແດ່ທ້ອນ |
| ເຮົານີ້ມີກຳແທ້ | ພາຍຫຼັງຊາດກ່ອນ |

ມາສົ່ງໃຫ້ ນຳໃຊ້ຊາດເວນ
ແມ່ຢ່າໄດ້ຄຽດຄ້ອຍ ຂັງຢູ່ໃນໃຈ
ກຳເວນມີ ທ່ອນຈິ່ງໜີເສັງໄດ້
ແມ່ຫາກໄຊ້ຊາດແລ້ວ ຫາຍສະຫວ່າງໂສກາ
ອັນວ່າຝູງເພື່ອຮາ ກໍດັ່ງດຽວກັນແລ້ວ
ແມ່ຢ່າຂົ່ມໃຈໃຫ້ ຣາຊາພູວະນາດ
ກັບທັງອາມາດພ້ອມ ຊຸນເຖົ້າສູ່ຄືນ
ອັນວ່າ ເວຣາກໍ້ ກຳເວນໃຜແຕ່ງ ເປັນເດ
ບາບແບ່ງໃຫ້ ຖຽງໄດ້ດັ່ງລື ແມ່ເຮີຍ
ບັດນີ້ ຫາຍເວນກໍ້ ໝົດກຳຂອງເກົ່າ
ບຸນຫາກມາຮອດແລ້ວ ຂືນໄດ້ດັ່ງລື ແມ່ເຮີຍ
ບັດນີ້ ບຸນຂວາງເຈົ້າ ມານດາພຣະແມ່
ຄວນທີ່ເປັນເອກເທົ້າ ຫຽມເຈົ້າມິ່ງເມືອງ ພຣະເຮີຍ"

ເມື່ອໄດ້ຍິນຄຳເວົ້າຂອງລູກແລ້ວ ນາງ ຄຳກອງກໍຫາຍຄວາມຄຽດ ແລ້ວກໍ່ຍິນດີກັບຄືນໃນຖານະເປັນເອກອັກຄະມະເຫສີ ຂອງພຣະເຈົ້າຈຸນລະນີແຫ່ງມະຫານະຄອນ ກໍ່ມີທໍ່ນີ້ແລ.

(ວາລະຕໍ່ມາ ເພັດຊະຣາຊກຸມມານ ຜູ້ເປັນລູກຫຼ້າ ຈຶ່ງໄດ້ໄປຊ່ອຍກອບກູ້ເອົາເມືອງພໍ່ເຖົ້າແມ່ເຖົ້າ ແຫ່ງຈັກຂິນມະຫານະຄອນ ອັນຣຸ້ງຍັກມາກິນ ໝົດສ້ຽງນັ້ນໃຫ້ຟື້ນຊີບກັບຄືນມາດັ່ງເດີມ.

ສ່ວນຮຸ້ງເຖົ້າຍັກສອງຜົວເມັຽທີ່ຮັກສາແກ້ວວິເສດໄວ້ ແລະ ຫຽວກິນເດັຽລະສານແລະ ຄົນມຸດທັງເມືອງນັ້ນກໍຂໍຕາຍໃຫ້ໝົດບາບກຳທີ່ຕົນໄດ້ໄຊ້ມາ ແລະ ຂໍຖວາຍແກ້ວມະນີໂຊດສອງໜ່ວຍທີ່ຈັບຢູ່ຫົວຂອງພວກມັນໃຫ້ແກ່ທ້າວອັນເປັນຜູ້ມີບຸນມາເກີດນັ້ນແລ)

# ອະທິບາຍສັພທ໌

| | |
|---|---|
| 1. ຄີລີ | = ພູເຂົາ |
| ວິງກົດ | = ປ່າໄມ້ໃຫຍ່ໃນປ່າຫິມມະພານ |
| 2. ໂຍດ | = ມາຈາກໂຍຊນ໌ ໄລຍະທາງຍາວ 3.200 ມ. |
| 3. ຂາ | = ເຂົາ |
| 4. ນະຄະເຣດ | = ເມືອງໃຫຍ່ |
| 5. ທົງ (ເມືອງ) | = ນັ່ງເມືອງ-ຄອງເມືອງ |
| 6. ທົດສະຣາຊ | = ຄອງສິບປະການຂອງກະສັດ |
| 7. ອະນັນເນກ | = ຫຼວງຫຼາຍ ນັບບໍ່ຖ້ວນ |
| 8. ພັງ-ພາຍ | = ຊ້າງ-ຊ້າງພັງຊ້າງພາຍ |
| 9. ຄວານ | = ຜູ້ບັງຄັບຊ້າງ |
| 10. ແຮ-ລີ້ວ | = ຜ້າແພ-ຜ້າແຮ-ຜ້າລີ້ວ |
| 11. ທັດສະດອນ | = ປະຊາຊົນຊັ້ນຕ່ຳ-ສາມັນຊົນ |
| 12. ຫອດ | = ຂາດເຂີນ-ເຫືອດແຫ້ງ |
| 13. ພາມມະນາ | = ພາມ-ນັກປາຊ-ຜູ້ສະຫຼາດຮູ້-ນັກບວດສາສະໜາພາມ |
| 14. ຍູ | = ຍູທ່າງ-ຕໍ່ແຮງ-ເຮັດໄດ້ຕາມໃຈ |
| 15. ໂພຄາ | = ຂອງຢູ່ຂອງກິນ-ເຂົ້າປາອາຫານ |
| 16. ໄຮ | = ເພິ່ນ |
| 17. ປະທຸມມາ | = ດອກບົວ |
| 18. ຊຽນ | = ແຕ້ມ-ວາດ |
| 19. ສຸຣິຍະຄາຕ | = ອາຄາຕສູນຕາເວັນ-ຕາເວັນມືດດັບແສງຍ້ອນພຣະຈັນບັງ |
| 20. ແຜ່ນປະທະພີ | = ແຜ່ນດິນ-ແຜ່ນໂລກ-ພິພົບ |
| 21. ໂຍມ | = ຍອມ (ໃນພາສາເກົ່າບູຮານ) |
| 22. ລີພົນ | = ກອງທັບ |
| 23. ຂ້າ | = ປະຊາຊົນ- ໄພ່ຟ້າຂ້າແຜ່ນດິນ |
| 24. ຄຸງຄາ | = ແມ່ນ້ຳສັກສິດທີ່ປະເທດອິນເດັຍ.ນ້ຳຂອງກໍ່ແມ່ນຊື່ຢືມມາຈາກຄຸງຄາ (ກອງເກັຍໃນສຳນຽງຂະເໝນ). |

24/VII ຫ້າມຈຳໜ່າຍ

| | | |
|---|---|---|
| 25. ອິນຕາຍ | = | ອັນຕະລາຍ-ເຄາະເຂັນ-ຄວາມຫາຍະນະ |
| 26. ນ້ຳມອກໃຫຍ່ | = | ປືນໃຫຍ່ |
| 27. ປະຄີ | = | ທຸງໄຊ |
| 28. ກີ | = | ທີ່ໃດ-ຈັກ... |
| 29. ບິນ | = | ເທິງ |
| 30. ລຸລາບ | = | ສຳເລັດຜົນ-ໄດ້ໂຊກ |
| 31. ສະບູ | = | ປືນໃຫຍ່ |
| 32. ເຕໂຊ | = | ເດດ-ລິດເດດ |
| 33. ມະນີໂຊ (ມະນີໂຊດ) | = | ແກ້ວທີ່ມີລິດເດດ |
| 34. ໄທທານ | = | ຄືນທານ-ທະຫານ |
| 35. ປະທຸມມາ | = | ດອກບົວ |
| 36. ຊົມພູທະວີບຫຼືຊົມພູທີບ | = | ດິນແດນອິນເດັຍ-ທະວີບອິນເດັຍ |
| 37. ພຣະພັກ(ຣາຊາສັພທ໌) | = | ໜ້າ |
| 38. ກະສັນ | = | ຢາກໄດ້ |
| 39. ແທນ | = | ແທ່ |
| 40. ມະຫິມາ | = | ໃຫຍ່ເຫຼືອຫຼາຍ |
| 41. ພາກ | = | ເປັນທ່າ-ຂີ່ຍຸກ |
| 42. ຜາຍຕີນເຂົ້າ | = | ຍ່າງຍ້າຍເຂົ້າໄປ |
| 43. ສູ່ພາຍ | = | ທຸກແຫ່ງ |
| 44. ຂວາງ | = | ໃຫຍ່-ກວ້າງ |
| 45. ຈຳປາສີ່ຕົ້ນ | = | ຕົ້ນຈຳປາສີ່ຕົ້ນນີ້ເອງທີ່ໄດ້ກາຍມາເປັນຫົວເລື່ອງຂອງວັນນະກັມມະຫາກາບຮຽກວ່າ "ຈຳປາສີ່ຕົ້ນ" |
| 46. ສອດສ່ອງສໍລະຍານ | = | ເບິ່ງດ້ວຍຕາທິບ |
| 47. ໜໍ່ໂພທິສັດ | = | ລູກຂອງພຣະພຸດທະເຈົ້າ |
| 48. ສາຕະສິນ ອາຄົມ | = | ສິລະປະໃນການໃຊ້ອາວຸດ ແລະ ເວດມົນ |

* * *

* *

# ບັນຊີປື້ມ

## ຊຸດ: ນິທານ ຝາພະໜັງວັດຊຽງທອງ

1. ສຽວສະຫວາດເຫລັ້ມ 1
2. ສຽວສະຫວາດເຫລັ້ມ 2
3. ນຸ່ງຜ້າລາຍໝາເຫົ່າ
4. ປາກອ້າເພີ່ນໂຕຕາຍ
5. ນາງ ຄໍາກອງ

